ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

02-08 ມິຖຸນາ 2023

ປີທີ 12

ສະບັບທີ 925

ລາຍສັບປະດາ

## ແຂວງວຽງຈັນ ດຳເນີນກອງປະຊຸມເປີດກວ້າງຄົບຄະນະກາງສະໄໝທີ VI






(ສພຊ) ກອງປະຊຸມເປີດກວ້າງຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຂວງວຽງຈັນ ສະໄໝທີ VI ໄດ້ໄຂຂຶ້ນໃນວັນທີ 30 ພຶດສະພາ 2023 ທີ່ສະໂມສອນໃຫຍ່ຂອງແຂວງ ໂດຍການເປັນປະທານຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ຜູ້ຊີ້ນຳແຂວງວຽງຈັນ; ມີສະຫາຍຄຳພັນ ສິດທິດຳພາ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງວຽງຈັນ; ມີຄະນະນຳຈາກສູນກາງ, ບັນດາສະຫາຍການນຳຂອງແຂວງເຂົ້າຮ່ວມ.

ໂອກາດນີ້, ສະຫາຍຄຳພັນ ສິດທິດຳພາ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ; ສະຫາຍ ບຸນສອນ ເພັດລາວັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກແຂວງ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກໄລຍະຜ່ານມາ ແລະ ທິດທາງນຳພາປະຕິບັດຄາດໝາຍສູ້ຊົນແຕ່ລະດ້ານໃນຕໍ່ໜ້າ; ຈາກນັ້ນ, ສະຫາຍ ດາວເຮືອງ ບັນທະວົງ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງວຽງຈັນ ໄດ້ຂຶ້ນຜ່ານບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະກາງສະໄໝຜ່ານມາ ຕິດພັນກັບການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດສອງວາລະແຫ່ງຊາດ ແລະ ທິດທາງແຜນການ, ຄາດໝາຍສູ້ຊົນໃນຕໍ່ໜ້າເຊິ່ງໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດວຽກງານຮອບດ້ານໃນກາງສະໄໝທີ່ຜ່ານມາ; ໂດຍລວມແລ້ວ ຄະນະບໍລິຫານງານພັກແຂວງວຽງຈັນ ໄດ້ນຳພາຄະນະພັກຂັ້ນຕ່າງໆ ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ຂອງແຂວງ ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍໄດ້ຫັນເປັນແຜນການ, ໂຄງການລະອຽດຂອງແຂວງ, ເມືອງ ແລະ ຂະແໜງການຕາມທ່າແຮງບົ່ມຊ້ອນຢ່າງມີຈຸດສຸມ ເຊິ່ງເຮັດໃຫ້ເສດຖະກິດຂອງແຂວງ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ສະເລ່ຍໃນລະດັບ4,2%ຕໍ່ປີ,ລວມຍອດຜະລິດຕະພັນພາຍໃນ (GDP) ບັນລຸໄດ້ 11,743 ຕື້ກີບ, ສະເລ່ຍຕໍ່ຫົວຄົນ 12.163.000 ກີບຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 785

ອ່ານຕໍ່ໜ້າ 4

ຂ່າວໜ້າໃນ



ຄະນະມິດຕະພາບ... (ໜ້າ 3)



ສ້າງຄວາມເຂັ້ມແຂງ... (ໜ້າ 3)



ປູກຈິດສຳນຶກ... (ໜ້າ 9)

## ຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5



(ສພຊ) ເພື່ອເປັນການຮັບປະກັນໃຫ້ບັນດາເນື້ອໃນທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບການຄົ້ນຄວ້າປະກອບຄຳຄິດຄຳເຫັນຈາກບັນດາສະມາຊິກສະພາແຫ່ງຊາດ ແລະ ສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆໃຫ້ເລິກເຊິ່ງ; ຍົກສູງປະສິດທິພາບໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແນໃສ່ເຮັດໃຫ້ການພິຈາລະນາ ແລະ ຮັບຮອງເນື້ອໃນກອງປະຊຸມມີຄຸນນະພາບ, ຮັບປະກັນການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ເພື່ອເຮັດໃຫ້ບັນດາກະຊວງ, ອົງການ ຂະແໜງການ

ອ່ານຕໍ່ໜ້າ 2

## ສຳເລັດກອງປະຊຸມຕິດຕາມກວດກາ ຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍຂັ້ງເຂດຍຸຕິທຳ



(ສພຊ) ເພື່ອຮັບປະກັນໃຫ້ແກ່ການກະກຽມເນື້ອໃນລາຍງານຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ໃຫ້ມີຄວາມເປັນເອກະພາບ ແລະ ມີຄຸນນະພາບ ສາມາດນຳເຂົ້າກອງປະ

ອ່ານຕໍ່ໜ້າ 4

## ສພຊ ສະຫຼຸບຕີລາຄາວຽກງານກໍ່ສ້າງພັກ-ພະນັກງານ ແລະ ການປັບປຸງກົງຈັກການຈັດຕັ້ງ



(ສພຊ) ວັນທີ 24 ພຶດສະພາຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ການປັບປຸງກົງຈັກການຈັດຕັ້ງ, ສະຫຼຸບໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ໂດຍການເປັນປະທານຂອງສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ກຳມະການປະຈຳພັກ, ປະທານຄະນະກວດກາພັກ ສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ມີບັນດາສະຫາຍຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກສົມ

ອ່ານຕໍ່ໜ້າ 2



## ຈົ່ງພ້ອມກັນປູກຈິດສຳນຶກໃຫ້ເດັກນ້ອຍລາວ ຮັກ ແລະ ຫວງແຫນປ່າໄມ້ເພື່ອຄວາມຢູ່ເຢັນເປັນສຸກຕະຫຼອດໄປ

(ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 43 ປີ ວັນທີ 1/6/1980-1/6/2023)

ນັບແຕ່ປີ 1980 ເປັນຕົ້ນມາ, ປວງຊົນລາວບັນດາເຜົ່າໄດ້ມີການຈັດກິດຈະກຳປູກຕົ້ນໄມ້ໃນໂອກາດສະເຫຼີມສະຫຼອງວັນເດັກນ້ອຍສາກົນຂອງທຸກໆປີ ຢ່າງເປັນຂະບວນຟົດຟື້ນໃນທົ່ວປະເທດ ດັ່ງຄຳຂວັນທີ່ວ່າ: "ການປູກຕົ້ນໄມ້ ໃນວັນນີ້ ເພື່ອລູກຫຼານໃນວັນໜ້າ". ຍ້ອນວ່າພັກເຮົາໄດ້ຖືສຳຄັນວຽກງານການຟື້ນຟູປ່າໄມ້ ທີ່ຕ້ອງໃຊ້ເວລາຍາວນານ ຈຶ່ງຈຳເປັນຕ້ອງໄດ້ປູກຈິດສຳນຶກໃຫ້ແກ່ເດັກນ້ອຍລາວບັນດາເຜົ່າ ຮັບຮູ້ແຈ້ງເຖິງບົດບາດ, ທີ່ຕັ້ງສຳຄັນ ແລະ ຄວາມໝາຍເປັນຕາຍຂອງປ່າໄມ້ ຕໍ່ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ, ຕໍ່ການດຳ

ອ່ານຕໍ່ໜ້າ 8

## ສະພາແຫ່ງຊາດ ສະເຫຼີມສະຫຼອງ ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ



(ສພຊ) ເພື່ອເປັນການປູກຈິດສຳນຶກໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ ແລະ ອານຸຊົນ, ພໍ່ແມ່ຜູ້ປົກຄອງ ກໍຄືອຳນາດການປົກຄອງ, ການຈັດຕັ້ງທຸກຂັ້ນ ເຫັນໄດ້ຄວາມສຳຄັນຂອງວັນເດັກນ້ອຍສາກົນ ວັນທີ 1 ມິຖຸນາ ເຊິ່ງຫຼາຍປະເທດໃນໂລກກໍໄດ້ຈັດຕັ້ງສະເຫຼີມສະຫຼອງດ້ວຍຫຼາຍກິດຈະກຳຢ່າງຄຶກຄື້ນ; ເພື່ອເສີມຂະຫຍາຍສາຍພົວພັນຄອບຄົວ, ພໍ່ແມ່-ລູກ ກໍຄືນະໂຍບາຍຂອງພັກ ແລະ ລັດເຮົາ ໃນການສຶກສາອົບຮົມ, ປູກຈິດສຳນຶກ ແນວຄິດຮັກຊາດ, ຮັກບ້ານເກີດເມືອງນອນ ທັງເປັນການປົກປ້ອງສິ່ງເສີມສິດຜົນປະໂຫຍດຂອງເດັກນ້ອຍຢູ່ ສປປລາວ ຕາມລະ

ອ່ານຕໍ່ໜ້າ 4

**ຊົມເຊີຍ ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ (ວັນທີ 1 ມິຖຸນາ) ຢ່າງສຸດໃຈ!**

# ລະດົມຄວາມຄິດເຫັນ ໃສ່ຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ

(ສພຊ) ໃນລະຫວ່າງວັນທີ 24-26 ພຶດສະພາ 2023 ທີ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໄດ້ມີກອງປະຊຸມສຳມະນາລະດົມຄວາມຄິດເຫັນໃສ່ຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳວຽກງານສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ມີທ່ານເລຂາທິການສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການ ສະພາແຫ່ງຊາດ, ບັນດາທ່ານປະທານສະພາປະຊາຊົນແຂວງຫຼວງພະບາງ, ອຸດົມໄຊ ແລະ ໄຊຍະບູລີ, ຄະນະກົມ, ຄະນະພະແນກ ຕະຫຼອດຮອດວິຊາການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.



ທັງນີ້, ເພື່ອລະດົມຄວາມຄິດເຫັນໃນການປັບປຸງເນື້ອໃນຂອງຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ ສຳລັບຝຶກອົບຮົມ, ການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ; ເພື່ອແລກປ່ຽນຄວາມຄິດເຫັນຕໍ່ເນື້ອໃນຂອງຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ສົມບູນ, ມີຫຼັກວິທະຍາສາດ ສອດຄ່ອງກັບຄວາມເປັນຈິງ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ເພື່ອຈະນຳເອົາຂໍ້ມູນຕ່າງໆຈາກການປະກອບຄຳຄິດຄຳເຫັນໄປຄົ້ນຄວ້າປະກອບໃສ່ບັນດາເນື້ອໃນຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ ໃຫ້ມີຜົນສຳເລັດຕາມແຜນການທີ່ວາງໄວ້ ໃຫ້ມີປະສິດທິພາບ.

ໃນໂອກາດດັ່ງກ່າວ, ໄດ້ຮັບຟັງການສະເໜີຫົວຂໍ້ວິທະຍາສາດ ແລະ ຫຼັກສູດ ສຸມໃສ່ແລກປ່ຽນບົດຮຽນ, ປະກອບຄຳຄິດຄຳເຫັນໃສ່ 4 ຫົວຂໍ້ບົດຄົ້ນຄວ້າ ຄື: ຄວາມຮູ້ພື້ນຖານກ່ຽວກັບສະພາແຫ່ງຊາດ; ຄວາມຮູ້ພື້ນຖານກ່ຽວກັບສະພາປະຊາຊົນຂັ້ນແຂວງ; ການຍົກສູງຄຸນະພາບ ໃນການຕິດຕາມກວດກາ ຂອງສະພາແຫ່ງຊາດ; ການໃຫ້ສຳພາດຂ່າວຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງບັນດາຫົວຂໍ້ດັ່ງກ່າວນຳສະເໜີໂດຍບັນດາທ່ານຈາກສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ພ້ອມກັນນັ້ນ, ບັນດາທ່ານຄະນະຮັບຜິດຊອບຄົ້ນຄວ້າໃນແຕ່ລະຫົວຂໍ້, ບັນດາທ່ານຜູ້ແທນກອງປະຊຸມ ໄດ້ມີການຄົ້ນຄວ້າແລກປ່ຽນຄວາມເຫັນ ແລະ ບົດຮຽນເຊິ່ງກັນແລະກັນ ຕາມແຕ່ລະຫົວຂໍ້ ເພື່ອເຮັດໃຫ້ເນື້ອໃນຂອງບົດຄົ້ນຄວ້າມີລັກສະນະວິທະຍາສາດ, ຕິດພັນກັບກົດໝາຍ, ມີເນື້ອໃນເລິກເຊິ່ງ ແລະ ສາມາດນຳໄປຈັດຕັ້ງປະຕິບັດ ໃຫ້ເກີດປະໂຫຍດສູງສຸດໃນການປະຕິບັດໜ້າທີ່ການເມືອງ ຂອງບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ.

ກອງປະຊຸມຄັ້ງນີ້, ນຳໃຊ້ງົບປະມານຊ່ວຍເຫຼືອລ້າຈາກມູນນິທິເອເຊຍ ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

**(ກົງໃຈ ແສງອຳພັນ)**

## ເລື່ອງເດັ່ນ ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*❐ ຢາສູບໄຟຟ້າມີຄວາມອັນຕະລາຍຫຼາຍກວ່າຢາສູບທຳມະດາ ເພາະແມ່ນການເສບນິໂກຕິນສົດໆ (ເດັກສູບຢາທຳມະດາ 70% ຕິດໄປຕະຫຼອດຊີວິດ ຄາດວ່າຢາສູບໄຟຟ້າເກືອບ 100% ຈະຕິດນິໂກຕິນໄປຕະຫຼອດຊີວິດ ແລະ ຢາຊະນິດນີ້ ເຮັດໃຫ້ຄົນໃນໂລກຕິດນິໂກຕິນເພີ່ມຂຶ້ນ ທັງທີ່ອັດຕາການສູບຢາທຳມະດາໃນທົ່ວໂລກນັບມື້ນັບຫຼຸດລົງ; ດັ່ງນັ້ນ, ສປປລາວ ໄດ້ມີກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ໄດ້ຫ້າມຢາສູບໄຟຟ້າທຸກຮູບແບບ ໂດຍສະເພາະການຜະລິດ, ການນຳເຂົ້າ, ສົ່ງອອກ, ການຈຳໜ່າຍຊື້-ຂາຍຢາສູບໄຟຟ້າ.*

***ໜສພ. ວຽງຈັນໃໝ່ 26/05/2023***

*❐ ສະເພາະວັນປູກຕົ້ນໄມ້ແຫ່ງຊາດ ໃນປີນີ້, ທົ່ວປະເທດ ມີແຜນການສ້າງຂະບວນການປູກຕົ້ນໄມ້ປະມານ 3 ພັນກວ່າເຮັກຕາ (3480 ເຮັກຕາ), ລວມເບ້ຍໄມ້ທັງໝົດປະມານ 3,4 ລ້ານກວ່າເບ້ຍ (3.484.000 ເບ້ຍ) ປະກອບມີ: ໄມ້ດູ່, ໄມ້ແຕ້ຂ່າ, ໄມ້ຍາງ, ໄມ້ສັກ, ໄມ້ແຄນ, ໄມ້ລິ້ນຟາດ, ໄມ້ຂະຍຸງ, ໄມ້ແຕ້, ໄມ້ສະຟາງ, ໄມ້ກາກະເລົາ, ໄມ້ຄູນ, ໄມ້ສາມສາ ແລະ ໄມ້ຊະນິດອື່ນ.*

***ໜສພ. ປະຊາຊົນ 30/05/2023***

## ສພຊ ສະຫຼຸບ...

(ຕໍ່ຈາກໜ້າ 1)

ບູນ-ສຳຮອງພາຍໃນອົງຄະນະພັກສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາລະກອງປະຊຸມ, ສະຫາຍ ສີງຄຳ ວົງພະຈັນ ກຳມະການຄະນະພັກສະພາແຫ່ງຊາດ, ຫົວໜ້າຄະນະຊ່ວຍວຽກພັກ, ຮອງເລຂາທິການສະພາແຫ່ງຊາດ ໄດ້ຂຶ້ນຜ່ານບັນດາເນື້ອໃນທີ່ສຳຄັນຂອງກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ວຽກງານປັບປຸງກົງຈັກການຈັດຕັ້ງ ທົ່ວປະເທດ ປະຈຳປີ 2022 ແລະ ທິດທາງໜ້າທີ່ປີ 2023; ຜ່ານມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຕີລາຄາພະນັກງານ ສະບັບເລກທີ 21/ກມສພ, ລົງວັນທີ 9 ພະຈິກ 2022; ພ້ອມດຽວກັນນັ້ນ, ສະຫາຍ ຍັງໄດ້ຜ່ານບົດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ການປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2022 ແລະ ວາງທິດທາງແຜນການປີ 2023 ຂອງສະພາແຫ່ງຊາດ ໂດຍໄດ້ຍົກໃຫ້ເຫັນຜົນງານດ້ານດີທີ່ສາມາດຈັດຕັ້ງປະຕິບັດໄດ້ຫຼາຍດ້ານເຊິ່ງວຽກງານການກໍ່ສ້າງພັກໄດ້ມີການກໍ່ສ້າງພັກໃນດ້ານຕ່າງໆ ຄື: ດ້ານການເມືອງ-ແນວຄິດ, ດ້ານການຈັດຕັ້ງ, ດ້ານແບບແຜນນຳພາ ແລະ ວິທີເຮັດວຽກ; ສ່ວນວຽກພະນັກງານໄດ້ຜັນຂະຫຍາຍມະຕິຂອງຄະນະບໍລິຫານງານສູນກາງພັກ ແລະ ວຽກງານປັບປຸງກົງຈັກການຈັດຕັ້ງ ໄດ້ຈັດຕັ້ງຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ແລະ ຄຳແນະນຳຂອງນາຍົກລັດຖະມົນຕີ ຕາມທິດກະທັດຮັດ, ສົມເຫດສົມຜົນ, ເຄື່ອນໄຫວມີປະສິດທິພາບ, ປະຕິບັດຕາມທິດ 3 ສ້າງ ແລະ ອື່ນໆ.

ໃນທີ່ປະຊຸມ, ໄດ້ຮັບຟັງການຜ່ານບົດແນະນຳຂອງຫ້ອງວ່າການສູນກາງພັກ ກ່ຽວກັບການຜັນຂະຫຍາຍຜົນສຳເລັດກອງປະຊຸມວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານພັດທະນາຊົນນະບົດຮອບດ້ານ ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ ສະບັບເລກທີ 02/ຫສພ, ລົງວັນທີ 21 ກຸມພາ 2023; ຜ່ານມະຕິຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ວ່າດ້ວຍການຮັບຮອງການຈັດປະເພດໜ່ວຍພັກສະມາຊິກພັກ ຢູ່ພາຍໃນອົງຄະນະພັກສະພາແຫ່ງຊາດ ປະຈຳປີ 2022, ສະບັບເລກທີ 11/ຄພ.ສພຊ, ລົງວັນທີ 3 ເມສາ 2023 ແລະ ຜ່ານມະຕິຂອງຄະນະພັກສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022, ສະບັບເລກທີ 09/ຄພ.ສພຊ, ລົງວັນທີ 3 ເມສາ 2023 ເຊິ່ງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີທັງໝົດ 12 ຮາກຖານພັກ, ໜ່ວຍພັກແຂງ 6 ຮາກຖານພັກ ແລະ ສະມາຊິກພັກປະເພດແຂງ ທັງໝົດ 261 ສະຫາຍ ຍິງ 100 ສະຫາຍ, ປະເພດກາງ 15 ສະຫາຍ ຍິງ 8 ສະຫາຍ.

ໂອກາດດັ່ງກ່າວ, ສະຫາຍ ຄຳໃບ ດຳລັດ ໄດ້ຕາງໜ້າໃຫ້ອົງຄະນະພັກສະພາແຫ່ງຊາດ ມອບໃບຍັ້ງຢືນໃຫ້ແກ່ໜ່ວຍພັກ ທີ່ຖືກຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຮາກຖານພັກທັງໝົດພາຍໃນສະພາແຫ່ງຊາດ ຍັງໄດ້ຂຶ້ນຈັບມືແຂ່ງຂັນ ແລະ ປະຕິຍານຕົນ ເພື່ອສືບຕໍ່ແຂ່ງຂັນສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນປີ 2023.

ໃນໂອກາດດຽວກັນນີ້, ຍັງໄດ້ຜ່ານຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານ ປະເພດ 4 ແລະ ປະເພດ 5; ພ້ອມທັງຮັບຟັງການມີຄຳເຫັນໂອ້ລົມຈາກສະຫາຍປະທານກອງປະຊຸມ ເພື່ອເປັນທິດເນື່ອງທາງໃຫ້ຮາກຖານພັກ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ໄດ້ນຳເອົາໄປຈັດຕັ້ງປະຕິບັດໃນວຽກງານຕົວຈິງ ໃຫ້ນັບມື້ດີຂຶ້ນເລື້ອຍໆ.

**(ປາກາລັກ ພົມມີໄຊ)**

## ຍົກສູງຄຸນນະພາບ...

(ຕໍ່ຈາກໜ້າ 1)

ແລະ ສະມາຊິກສະພາແຫ່ງຊາດ ໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ເຂົ້າໃຈເປັນເອກະພາບຕໍ່ບັນດາເນື້ອໃນບົດລາຍງານ ແລະ ກົດໝາຍທີ່ມີລັກສະນະວິຊາການ, ຮັບປະກັນການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍກຳນົດ.

ໃນລະຫວ່າງວັນທີ 29 ພຶດສະພາ-2 ມິຖຸນາ 2023 ທີ່ໂຮງແຮມແລນມາກ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ມີບັນດາທ່ານສະມາຊິກສະພາແຫ່ງຊາດ, ລັດຖະມົນຕີ, ຮອງລັດຖະມົນຕີ ຈາກກະຊວງຕ່າງໆ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານເນື້ອໃນພື້ນເດັ່ນຂອງຮ່າງກົດໝາຍ ຈຳນວນ 5 ສະບັບ ໃນນີ້: ຮ່າງກົດໝາຍວ່າດ້ວຍການປົກຄອງ (ກົດໝາຍສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ (ກົດໝາຍສ້າງໃໝ່), ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ (ກົດໝາຍສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການຈັດຫາງານ (ກົດໝາຍສ້າງໃໝ່), ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ກົດໝາຍປັບປຸງ); ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 2 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 2 ສະບັບ ຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງແຜນການລົງທຶນ ແລະ ການຈັດສັນງົບປະມານໃຫ້ແກ່ໂຄງການລົງທຶນຂອງລັດປະຈຳປີ 2024; ບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030; ບົດລາຍງານຂອງລັດຖະບານກ່ຽວກັບ (ຮ່າງ) ຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030); ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດລາຍງານຂອງລັດຖະບານກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ. ຈາກນັ້ນ, ບັນທ່ານສະມາຊິກສະພາແຫ່ງຊາດ ກໍໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບັນດາຫົວຂໍ້ບົດລາຍງານຕ່າງໆ ຕາມຄຳເຫັນເຈາະຈີ້ມຂອງປະທານກອງປະຊຸມແຕ່ລະອັນ.

**(ສອນສັກ ວັນວິໄຊ)**

# ຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ສຳເລັດການຢ້ຽມຢາມ ສ.ເກົາຫຼີ



(ສພຊ) ໃນລະຫວ່າງວັນທີ 19-22 ພຶດສະພາ 2023 ຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫຼີ ນຳໂດຍທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ພ້ອມດ້ວຍຄະນະ ໄດ້ສຳເລັດການເດີນທາງຢ້ຽມຢາມ ສ.ເກົາຫຼີ.

ໃນການຢ້ຽມຢາມຄັ້ງນີ້, ຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫຼີ ໄດ້ເຂົ້າຢ້ຽມຂຳນັບທ່ານ Chung Woo Taik ຮອງປະທານສະພາແຫ່ງຊາດແຫ່ງ ສ.ເກົາຫຼີ ໂດຍທ່ານໄດ້ກ່າວຕ້ອນຮັບຄະນະຜູ້ແທນຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ ຢ່າງອົບອຸ່ນ ແລະ ໄດ້ຕີລາຄາສູງຕໍ່ສາຍພົວພັນຮ່ວມມືທີ່ມີມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງ ສອງປະເທດ ສ.ເກົາຫຼີ-ລາວ ກໍຄື ລະຫວ່າງສອງສະພາແຫ່ງຊາດທີ່ໄດ້ມີການພົວພັນປະສານງານ ແລະ ສະໜັບສະໜູນ ເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ; ພ້ອມນັ້ນ, ທັງສອງປະເທດ ກໍໄດ້ມີການຮ່ວມມືກັນຫຼາຍດ້ານ ເປັນຕົ້ນ: ດ້ານການລົງທຶນ, ການຄ້າ, ການສຶກສາ, ການທ່ອງທ່ຽວ ແລະ ທ່ານໄດ້ເນັ້ນຕໍ່ຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫຼີ ຂອງສະພາແຫ່ງຊາດລາວ ໃນການສືບຕໍ່ສົ່ງເສີມການຮ່ວມມື ລະຫວ່າງ ສອງປະເທດ ກໍຄື ສອງອົງການນິຕິບັນຍັດໃຫ້ມີການຂະຫຍາຍຕົວຫຼາຍຂຶ້ນກວ່າເກົ່າ.

ໃນໂອກາດດັ່ງກ່າວ, ທ່ານ ຣສ.ປອ. ລິນຄຳ ດວງສະຫວັນ ຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ແລະ ສະພາແຫ່ງຊາດ ສ.ເກົາຫຼີ ທີ່ໄດ້ໃຫ້ການຕ້ອນຮັບແກ່ຄະນະຜູ້ແທນລາວ ເປັນຢ່າງດີ ແລະ ໄດ້ຕີລາຄາສູງຕໍ່ສາຍພົວພັນຮ່ວມມືທີ່ມີມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງ ສອງປະເທດ ລາວ-ສ.ເກົາຫຼີ ກໍຄື ສອງອົງການນິຕິບັນຍັດ ຂອງສອງປະເທດ. ທ່ານຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວສະໜັບສະໜູນການເປັນເຈົ້າພາບງານ World Expo 2030 ທີ່ເມືອງ Busan, ໄດ້ສະແດງຄວາມຂອບໃຈ ແລະ ໄດ້ຕີລາຄາສູງ ທີ່ ສ.ເກົາຫຼີ ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປລາວ ມາໂດຍຕະຫຼອດ; ພ້ອມດຽວກັນນັ້ນ, ທ່ານຍັງໄດ້ແຈ້ງກ່ຽວກັບການກະກຽມເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ຈະຈັດຂຶ້ນຢູ່ ສປປລາວ ໃນປີ 2024 ແລະ ຫວັງຢ່າງຍິ່ງວ່າສະພາແຫ່ງຊາດ ສ.ເກົາຫຼີ ຈະໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມໃຫຍ່ຄັ້ງນີ້; ຈາກນັ້ນ, ຄະນະຜູ້ແທນລາວ ຍັງໄດ້ພົບປະ ແລະ ເຮັດວຽກກັບທ່ານ Kim Hack Young ປະທານຄະນະມິດຕະພາບລັດຖະສະພາ ສ.ເກົາຫຼີ-ລາວ ພ້ອມດ້ວຍຄະນະ ເຊິ່ງໄດ້ປຶກສາຫາລືກັນກ່ຽວກັບການສົ່ງເສີມການຮ່ວມມືຂອງສອງຄະນະມິດຕະພາບລັດຖະສະພາ ກໍຄືສອງສະພາແຫ່ງຊາດໃນຕໍ່ໜ້າ ໃຫ້ມີການແລກປ່ຽນການຢ້ຽມຢາມໄປມາຫາສູ່ນຳກັນຢ່າງເປັນປົກກະຕິ; ຊຸກຍູ້ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງ ທີ່ໄດ້ເຊັນຮ່ວມກັນໃຫ້ມີປະສິດທິພາບ ປະສິດທິຜົນ ນຳເອົາຜົນປະໂຫຍດອັນແທ້ຈິງມາສູ່ປະຊາຊົນຂອງສອງປະເທດ ແລະ ສືບຕໍ່ໂຄສະນາເຜີຍແຜ່ການພົວພັນຮ່ວມມືທີ່ມີມູນເຊື້ອອັນດີງາມຂອງສອງປະເທດ ທີ່ເປັນທ່າແຮງເພື່ອດຶງດູດນັກທຸລະກິດຂອງ ສ.ເກົາຫຼີ ເຂົ້າມາລົງທຶນຢູ່ ສປປ ລາວ ໃຫ້ຫຼາຍຂຶ້ນ.

ໃນໂອກາດຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນລາວ ຍັງໄດ້ໄປຢ້ຽມຢາມ ແລະ ເຮັດວຽກຢູ່ເມືອງ Heongsung ແຂວງ Gangwon ເຊິ່ງເປັນເມືອງໜຶ່ງທີ່ມີຊື່ສຽງທາງດ້ານການຜະລິດກະສິກຳ, ຢ້ຽມຢາມສວນປູກພືດຜັກ Oseong ແບບທັນສະໄໝ (Smart Farm), ໂຮງງານຜະລິດເຂົ້າໜົມ Mil-won Anheung ແລະ ໃນໂອກາດດັ່ງກ່າວ ຄະນະຜູ້ແທນລາວ ຍັງໄດ້ໄປຢ້ຽມຢາມໂຮງງານຜະລິດຍົນ ຂອງບໍລິສັດ KIA ທີ່ເມືອງ Hwaseong-si ແຂວງ Gyeonggi-do ຕື່ມອີກ.

**(ນັກຂ່າວ: ກສຕສ)**




# ສ້າງຄວາມເຂັ້ມແຂງທີ່ຕິດພັນກັບການປະເມີນຜົນກາງສະໄໝ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ



(ສພຊ) ເພື່ອສ້າງຄວາມເຂັ້ມແຂງ ບົດຮຽນໃນການປະເມີນຜົນກາງສະໄໝ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການເຜີຍແຜ່ຜົນການຄົ້ນຄວ້າ, ການສ້າງປຶ້ມຄູ່ມື ແລະ ການພັດທະນາຖານຂໍ້ມູນໃນຂົງເຂດກຳມາທິການແຜນການ, ການເງິນ ແລະ ການກວດສອບໃຫ້ແກ່ພະນັກງານວິຊາການຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ແລະ ພະນັກງານວິຊາການສະພາປະຊາຊົນແຂວງ; ປຶກສາຫາລືແຜນການຄົ້ນຄວ້າປະເມີນຜົນກາງສະໄໝຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການສ້າງປຶ້ມຄູ່ມື ແລະ ການພັດທະນາຖານຂໍ້ມູນໃນຂົງເຂດແຜນການ, ການເງິນ ແລະ ການກວດສອບ ໃຫ້ພະນັກງານວິຊາການຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ແລະ ເພື່ອເປັນການສ້າງຄວາມຮູ້ຄວາມສາມາດລົງເລິກ ແລະ ເຝິກຫັດຕົວຈິງໃຫ້ມີປະສົບການທາງດ້ານການປະເມີນຜົນ.

ໃນລະຫວ່າງວັນທີ 24-26 ພຶດສະພາ 2023 ທີ່ຫ້ອງປະຊຸມພະແນກການເງິນແຂວງຫລວງພະບາງ ກຳມາທິການແຜນການ, ການເງິນ ແລະ ການກວດສອບໄດ້ຈັດກອງປະຊຸມສ້າງຄວາມເຂັ້ມແຂງທີ່ຕິດພັນກັບການປະເມີນຜົນກາງສະໄໝ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການເຜີຍແຜ່ການຄົ້ນຄວ້າ, ການສ້າງປຶ້ມຄູ່ມື ແລະ ການພັດທະນາຖານຂໍ້ມູນ ໃນຂົງເຂດກຳມາທິການແຜນການ, ການເງິນ ແລະ ການກວດສອບ ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ; ມີທ່ານຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຄະນະກົມ, ຄະນະພະແນກ ແລະ ວິຊາການພາຍໃນກຳມາທິການ ແລະ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ບັນດາທ່ານວິທະຍາກອນຈາກກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ສູນສະຖິຕິແຫ່ງຊາດ, ຊ່ຽວຊານອາວຸໂສຈາກສູນສະຖິຕິແຫ່ງຊາດ, ບໍລິສັດ ລາວໄອທີພັດທະນາ ຈຳກັດ ແລະ ຊ່ຽວຊານຈາກສາກົນ ຈາກບໍລິສັດ LTS Venture ແລະ ແຂກທີ່ຖືກເຊີນຈາກສະພາປະຊາຊົນແຂວງທົ່ວປະເທດ, ຄະນະຮັບຜິດຊອບໂຄງການຊ່ວຍເຫຼືອສະພາແຫ່ງຊາດ ແລະ ສື່ມວນຊົນເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານປະຈຳປີ 2022 ແລະ ແຜນການປະຈຳປີ 2023; ສະເໜີແຜນການປະເມີນຜົນກາງສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຜົນການຄົ້ນຄວ້າທີ່ກ່ຽວຂ້ອງ ແລະ ການພັດທະນາຖານຂໍ້ມູນ (ສະບັບຮ່າງ); ການສະເໜີແຜນການປະເມີນຜົນກາງສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນງົບປະມານແຫ່ງລັດ ແລະ ເງິນຕາ; ຫລັກການ, ກົນໄກ ແລະ ວິທີການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ຫລັກການ, ກົນໄກ ແລະ ວິທີການປະເມີນຜົນແຜນກາງສະໄໝຕໍ່ແຜນງົບປະມານແຫ່ງລັດ, ແຜນເງິນຕາ; ການສະເໜີເຕັກນິກວິທີການສ້າງຖານຂໍ້ມູນ ແລະ ການເຊື່ອມໂຍງຖານຂໍ້ມູນ ທີ່ຕິດພັນກັບການປະເມີນຜົນກາງສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ບົດຮຽນສາກົນກ່ຽວກັບການປະເມີນຜົນ ແລະ ການສ້າງຖານຂໍ້ມູນການປະເມີນຜົນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ບົດຮຽນສາກົນ ກ່ຽວກັບການປະເມີນຜົນແຜນງົບປະມານແຫ່ງລັດ ແລະ ເງິນຕາ; ເຕັກນິກວິທີການອອກແບບແອັບສຳລັບສ້າງຖານຂໍ້ມູນ ແລະ ເຊື່ອມໂຍງຂໍ້ມູນ ລວມທັງງົບປະມານການໃຊ້ຈ່າຍການອອກແບບການນຳໃຊ້ ແລະ ຮັກສາຖານຂໍ້ມູນ; ສະເໜີໂຄງຮ່າງການປະເມີນພາກສະເໜີ, ຈຸດປະສົງ, ທົບທວນວັນນະກຳ, ວິທີວິທະຍາ (ວິທີວິໄຈປະລິມານ ແລະ ຄຸນນະພາບ, ຕົວປ່ຽນແປງ, ກຸ່ມຕົວຢ່າງ, ການເກັບກຳຂໍ້ມູນ, ວິທີວິເຄາະ), ການຂຽນລາຍງານ ແລະ ສະຫຼຸບຜົນການປະເມີນ ແລະ ຜູ້ເຂົ້າຮ່ວມໄດ້ແບ່ງກຸ່ມອອກເປັນ 3 ກຸ່ມ ເພື່ອຄົ້ນຄວ້າ, ແລກປ່ຽນຖອດຖອນບົດຮຽນເຊິ່ງກັນແລະກັນ ແລະ ຂຶ້ນສະເໜີບົດກ່ຽວກັບແຜນການປະເມີນຜົນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ແຜນການຄົ້ນຄວ້າແຜນງົບປະມານແຫ່ງລັດ ແລະ ແຜນການຄົ້ນຄວ້າແຜນເງິນຕາ ຈາກຕາງໜ້າແຕ່ລະກຸ່ມ ແລະ ຮັບຟັງການສະເໜີແຜນການເຄື່ອນໄຫວຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ໃນການປະເມີນຜົນກາງສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ ແລະ ແຜນເງິນຕາ, ການສ້າງ ແລະ ການເຊື່ອມໂຍງແຜນເງິນຕາ, ການສ້າງ ແລະ ການເຊື່ອມໂຍງຖານຂໍ້ມູນ (ສະບັບປັບປຸງ); ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ພັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຫົວຂໍ້ດັ່ງກ່າວຕາມຄຳເຫັນເຈາະຈີ້ມຂອງປະທານກອງປະຊຸມເພື່ອຖອດຖອນບົດຮຽນເຊິ່ງກັນແລະກັນ.

**(ສອນສັກ ວັນວິໄຊ)**

## ສຳເລັດ...

(ຕໍ່ຈາກໜ້າ 1)

ຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາ ແລະ ຮັບຮອງ; ເພື່ອສະຫຼຸບຖອດຖອນບົດຮຽນໃຫ້ແກ່ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຕ່າງໆໃນຕໍ່ໜ້າ. ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຕິດຕາມກວດກາຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ໃນວັນທີ 23-24 ພຶດສະພາ ຜ່ານມາ, ທີ່ເມືອງວັງວຽງແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ; ໂດຍການເຂົ້າຮ່ວມຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳກຳມາທິການຍຸຕິທຳ ທັງເປັນປະທານກຳມາທິການກົດໝາຍ, ມີບັນດາທ່ານຮອງປະທານກຳມາທິການ, ບັນດາທ່ານຮອງລັດຖະມົນຕີ, ຕາງໜ້າຈາກຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ສານທະຫານຂັ້ນສູງ ແລະ ແຂກຖືກເຊີນ.

ໃນກອງປະຊຸມ, ໄດ້ຮັບຟັງລາຍງານຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; ລາຍງານຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ແລະ ກົດໝາຍການດຳເນີນຄະດີອາຍາ; ລາຍງານຜົນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ; ການຜ່ານຮ່າງບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງມະຕິຮັບຮອງຜົນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ສຸມສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ບົດລາຍງານດັ່ງກ່າວ ເພື່ອເຮັດໃຫ້ມີເນື້ອໃນສອດຄ່ອງສົມບູນຂຶ້ນກວ່າເກົ່າ.

ໂອກາດນີ້, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງມີທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະຮັບຜິດຊອບຕິດຕາມກວດກາຂອງສະພາແຫ່ງຊາດ ທີ່ໄດ້ມີຄວາມເອົາໃຈໃສ່ໃນການປະຕິບັດໜ້າທີ່ເປັນຕົ້ນແມ່ນໄດ້ພະຍາຍາມປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງໄດ້ລົງໄປຕິດຕາມກວດກາຢູ່ບັນດາແຂວງຈຳນວນໜຶ່ງ ແລະ ປະສານສົມທົບກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເພື່ອຈັດກອງປະຊຸມຕ່າງໆເພື່ອຄົ້ນຄວ້າປຶກສາຫາລື ໂດຍສະເພາະກໍແມ່ນກອງປະຊຸມໃນມື້ນີ້ ເພື່ອຈະກວດກາຄວາມພ້ອມ, ການກະກຽມ ການຕິດຕາມການປະເມີນແລ້ວລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນຕໍ່ບັນຫາດັ່ງກ່າວນີ້ ເປັນໜຶ່ງໃນບັນຫາທີ່ຄະນະປະຈຳສະພາແຫ່ງຊາດໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຊີ້ນຳ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນຕື່ມບາງບັນຫາດັ່ງນີ້: ການປະເມີນຊຸດນີ້ຕ້ອງຕີລາຄາໃຫ້ໄດ້ວ່າການຈັດຕັ້ງກົງຈັກຂອງສານຂອງໄອຍະການແຕ່ລະຂັ້ນ ນັບຕັ້ງແຕ່ຂັ້ນສູງຮອດຂັ້ນຕໍ່າ ແຕ່ລະພາກສ່ວນສອດຄ່ອງແລ້ວບໍ່ ຖືກຕ້ອງແລ້ວບໍ່ ກັບສະພາບຄວາມເປັນຈິງ, ສອດຄ່ອງກັບທັດສະນະແນວທາງນະໂຍບາຍຂອງພັກໃນໄລຍະນີ້ ເປັນຕົ້ນແມ່ນສານຂັ້ນຕົ້ນ; ຕ້ອງຕີລາຄາໃຫ້ໄດ້ການກຳນົດບົດບາດ, ສິດ ແລະ ໜ້າທີ່ ຫຼື ສິດອຳນາດຂອງສານ, ໄອຍະການແຕ່ລະຂັ້ນ ຈະແຈ້ງຮັດກຸມຄົບຊຸດແລ້ວບໍ່ ຖ້າວ່າຈະແຈ້ງຄົບຖ້ວນແລ້ວ ການຈັດຕັ້ງປະຕິບັດມີອັນໃດດີອັນໃດອ່ອນ ສາເຫດຍ້ອນຫຍັງ; ໃຫ້ເອົາໃຈໃສ່ການຕີລາຄາບຸກຄະລາກອນ ຖັນແຖວບຸກຄະລາກອນຂອງສານຂອງໄອຍະການ ມາຮອດປັດຈຸບັນການຕີລາຄາດ້ານປະລິມານຄຸນນະພາບເໝາະສົມ, ສອດຄ່ອງ, ພຽງພໍແລ້ວບໍ່ດ້ານຄຸນທາດການເມືອງໜັກແໜ້ນຕໍ່ລະບອບການເມືອງແລ້ວບໍ່; ຕີລາຄາໃຫ້ອອກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ຄະດີອາຍາ ເຊິ່ງແມ່ນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດພາລະບົດບາດຂອງແຕ່ລະອົງການ; ສະນັ້ນ, ບັນຫາຫຼັກໆຕ້ອງເບິ່ງວ່າຂັ້ນຕອນ,ວິທີການ ແລະ ມາດຕະການຕ່າງໆ ທີ່ລະບຸໄວ້ໃນສອງກົດໝາຍ ສອດຄ່ອງຫຼືບໍ່ ຕ້ອງຕີລາຄາໃຫ້ມັນອອກ ແລະ ຫຼັງຈາກນັ້ນຈະປັບປຸງອັນໃດ ຈະແກ້ອັນໃດຈຶ່ງເຮັດໃຫ້ການປະຕິບັດໜ້າທີ່ມີຄຸນນະພາບ.

**(ກົງທະນູຄຳ ພິພັດເສລີ)**

## ແຂວງວຽງຈັນ...

(ຕໍ່ຈາກໜ້າ 1)

ໂດລາ ເທົ່າກັບ 29,47% ຂອງແຜນການ; ຜົນຜະລິດດ້ານກະສິກຳເຫັນວ່າຍັງເປັນຫຼັກຄ້ຳໃຫ້ແກ່ເສດຖະກິດຂອງແຂວງ, ຜົນຜະລິດດ້ານອຸດສະຫະກຳຍັງເປັນອັນຕົ້ນຕໍຂອງການພັດທະນາ, ການບໍລິການດ້ານການທ່ອງທ່ຽວມີນັກທ່ອງທ່ຽວເພີ່ມຂຶ້ນຫຼາຍພັນເທື່ອຄົນ ວຽກງານພື້ນຖານໂຄງລ່າງ ແລະ ວັດທະນະທຳ-ສັງຄົມ ກໍໄດ້ຮັບການພັດທະນາ ແລະ ຍົກລະດັບດີຂຶ້ນເປັນກ້າວໆ.

ໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນເຈາະຈີ້ມ ແລະ ຊີ້ນຳ ຕໍ່ການດຳເນີນກອງປະຊຸມ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນ ຕໍ່ເນື້ອໃນຂອງກອງປະຊຸມ ໃນວາລະເປີດກວ້າງຄົບຄະນະ ໃນແຕ່ລະຫົວຂໍ້ ເປັນຕົ້ນບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກແຂວງກາງສະໄໝ, ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ສອງວາລະແຫ່ງຊາດ, ລວມທັງການກຳນົດທິດທາງນຳພາ ແລະ ຄາດໝາຍສູ້ຊົນໃນເຄິ່ງສະໄໝຕໍ່ໜ້າ ຕິດພັນກັບຄຳເຫັນເຈາະຈີ້ມ ຄື: ບັນດາຜົນງານ ແລະ ຜົນສຳເລັດທີ່ພົ້ນເດັ່ນ ທີ່ໄດ້ຍົກຂຶ້ນ ໄລຍະສອງປີເຄິ່ງຜ່ານມາ ເຫັນວ່າຈະແຈ້ງ, ຄົບຖ້ວນ ແລະ ກວມລວມແລ້ວບໍ່; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂອງແຂວງ, ອັນໃດແມ່ນຜົນງານທີ່ພົ້ນເດັ່ນ ແລະ ສາມາດເປັນຍຸດທະສາດປາຍແຫຼມໃນການພັດທະນາ, ອັນໃດທີ່ຍັງເປັນບັນຫາຄົງຄ້າງ, ສາເຫດຍ້ອນຫຍັງ ແລະ ສິ່ງກີດຂວາງ ກໍຄືບັນດາຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດ ມີຄືແນວໃດ ແລະ ໃນຕອນທ້າຍກອງປະຊຸມ, ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມ ຍັງໄດ້ປະກອບຄຳຄິດຄຳເຫັນໃສ່ 2 ຮ່າງບົດສະຫຼຸບດັ່ງກ່າວ.

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ບຽບກົດໝາຍທີ່ກຳນົດໄວ້. ໃນວັນທີ 1 ມິຖຸນາ 2023 ທີ່ສະພາແຫ່ງຊາດ ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ໂດຍມີການນຳຂອງສະພາແຫ່ງຊາດ, ກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ, ຕາງໜ້າສູນກາງສະຫະພັນກຳມະບານລາວ, ຕາງໜ້າສູນກາງສະຫະພັນແມ່ຍິງລາວ, ຕາງໜ້າສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ພ້ອມດ້ວຍລູກຫຼານຂອງພະນັກງານພາຍໃນສະພາແຫ່ງຊາດເຂົ້າຮ່ວມເປັນຈຳນວນຫຼາຍ.

ໃນພິທີດັ່ງກ່າວ,ມີຫຼາກຫຼາຍກິດຈະກຳຄື: ຢ້ຽມຊົມຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ແລະ ຫໍມູນເຊື້ອ; ກວດສຸຂະພາບໃຫ້ເດັກນ້ອຍ; ຫຼິ້ນເກມ, ຖາມ-ຕອບ ຫຼື ແຕ້ມຮູບ ແລະ ການສະແດງສິລະປະຂອງຫຼານນ້ອຍ; ບັນດາທ່ານການນຳ, ພັນລະຍາການນຳ ແລະ ອົງການຈັດຕັ້ງມະຫາຊົນ ມອບຂອງຂວັນ, ເຂົ້າໜົມໃຫ້ຫຼານນ້ອຍ; ຄອບຄົວການນຳຂອງສະພາແຫ່ງຊາດ ຈັດບູດອາຫານ ເພື່ອລ້ຽງເດັກນ້ອຍ ແລະ ຜູ້ເຂົ້າຮ່ວມງານ (ກຳມາທິການຂອງສະ ພາແຫ່ງຊາດ ແລະ ຄະນະເລຂາທິການສະພາແຫ່ງຊາດ).

ໃນພິທີຄັ້ງນີ້, ທ່ານ ມອນໄຊ ລາວມົວຊົ່ງ ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ມີຄຳເຫັນວ່າ: ວັນເດັກແຕ່ລະປີ ແມ່ນເຫດການພິເສດໜຶ່ງທີ່ມີຄວາມໝາຍຕໍ່ເດັກ ຈຸດປະສົງແນໃສ່ຊຸກຍູ້ສົ່ງເສີມ, ພັດທະນາ ແລະ ປົກປ້ອງເດັກ ໃນທົ່ວໂລກ; ຍ້ອນເຫັນໄດ້ຄວາມສຳຄັນຂອງເດັກ ທີ່ເປັນອະນາຄົດຂອງຊາດ, ເປັນເມັດພືດ, ເປັນໜໍ່ແໜງທົນຮອນແຫ່ງຊີວິດໃນມື້ນີ້ ເພື່ອກາຍເປັນອະນາຄົດອັນແຈ່ມໃສຂອງປະເທດຊາດໃນມື້ໜ້າ, ທົ່ວໂລກ ຈຶ່ງໄດ້ສະເຫຼີມສະຫຼອງວັນເດັກສາກົນຕາມເງື່ອນໄຂ ແລະ ສະພາບຕົວຈິງຂອງປະເທດຕົນ. ປັດຈຸບັນໃນທົ່ວໂລກ ກໍຄື ສປປລາວ ໄດ້ກຳນົດເອົາການສະເຫຼີມສະຫຼອງວັນເດັກ ມີ 3 ວັນຄື: ວັນເດັກສາກົນ (ວັນທີ 1 ມິຖຸນາ), ວັນເດັກຈັກກະວານ ຫຼື ວັນເດັກໂລກ (20 ພະຈິກ) ແລະ ວັນເດັກແຫ່ງຊາດ ຫຼື ວັນຄອບຄົວແຫ່ງຊາດ (ຕາມແຕ່ລະປະເທດກຳນົດ).



# ກອງປະຊຸມປຶກສາຫາລືບັນຫານ້ຳ ໃນອາຊີ



(ສພຊ) ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມສະພາທີ່ປຶກສາເລື່ອງນ້ຳຂອງສະພາແຫ່ງຊາດບັນດາປະເທດສະມາຊິກອາຊີ ຄັ້ງທີ 5 (The 5th Asia National Assembly Water Consultative Board-AAWC) ເຊິ່ງຈັດຂຶ້ນທີ່ນະຄອນຫລວງພະນົມເປັນ ລາຊະອານາຈັກກຳປູເຈຍ ໃນລະຫວ່າງວັນທີ 23-24 ພຶດສະພາ 2023 ເຊິ່ງຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສຈ. ປອ. ຫົງຄຳ ສຸວັນນະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ຕາງໜ້າໃຫ້ສະພາແຫ່ງຊາດລາວ ແລະ ໃນນາມເປັນສະມາຊິກສະພາທີ່ປຶກສາອົງການ AAWC ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືບັນຫານ້ຳໃນອາຊີ ໂດຍມີບັນດາປະເທດໃນຂົງເຂດເຂົ້າຮ່ວມ ເຊັ່ນ: ກຽກກີສະຖານ, ອຸສເບກິສຖານ, ກາຊັກສະຖານ, ສ.ເກົາຫຼີ, ກຳປູເຈຍ, ມາເລເຊຍ, ເນປານ, ສປປລາວ, ອົງການນ້ຳອາຊີ, ບັນດາອົງການຈັດຕັ້ງສາກົນ ແລະ ຜູ້ຕາງໜ້າລັດຖະບານຈາກລາຊະອານາຈັກກຳປູເຈຍ ເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນບັນຫາທີ່ກະທົບຂອງແຕ່ລະປະເທດ, ຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ, ບັນຫາຄຸ້ມຄອງບໍລິຫານນ້ຳ, ແລກປ່ຽນປະສົບການ ແລະ ວິທີການແກ້ໄຂບັນຫານ້ຳຂອງແຕ່ລະປະເທດ, ການແລກປ່ຽນປະສົບການ, ບັນຫາການຮ່ວມມືສາກົນ ເພື່ອແກ້ໄຂບັນຫານ້ຳແບບຍືນຍົງ; ພ້ອມນັ້ນ, ຄະນະຜູ້ແທນສະພາແຫ່ງຊາດ ຍັງໄດ້ປະກອບຄຳຄິດຄຳເຫັນໃນຫົວຂໍ້ບົດລາຍງານປະຈຳປີຂອງສະພາທີ່ປຶກສາ ແລະ ຫົວຂໍ້ວາລະການດຳເນີນການອາຊີກ່ຽວກັບບັນຫານ້ຳ.

ໃນຕອນທ້າຍ,ກອງປະຊຸມໄດ້ເປັນເອກະພາບຮັບຮອງເອົາຖະແຫຼງການພະນົມເປັນ (Phnom Penh Declaration)



# ຮອງປະທານສະພາປະຊາຊົນ ນວ ເຄື່ອນໄຫວເຮັດວຽກຢູ່ ພະແນກແຮງງານ ແລະ ສະຫວັດດີການສັງຄົມ




(ສພຊ) ຕອນເຊົ້າວັນທີ 18 ພຶດສະພາ 2023 ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ທ່ານ ນາງ ເກດມະນີ ບັນດາສັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ນາງ ຄຳແຫວນ ສິງບັນດິດ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2023 ຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫຼວງວຽງຈັນ (ນວ) ໂດຍໄດ້ຮັບການຕ້ອນຮັບຈາກທ່ານ ສາລະພົດ ສູນວໍລະວົງ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນວ, ມີບັນດາທ່ານຫົວໜ້າຫ້ອງການພະແນກແຮງງານ ແລະ ສະຫວັດດີການສັງຄົມ 9 ເມືອງ, ບັນດາທ່ານຫົວໜ້າຂະແໜງກ່ຽວຂ້ອງ ແລະ ພະນັກງານວິຊາການ ຈຳນວນໜຶ່ງໄດ້ໃຫ້ການເຂົ້າຮ່ວມ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ສາລະພົດ ສູນວໍລະວົງ ໄດ້ລາຍງານໃຫ້ຊາບກ່ຽວກັບຜົນການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນຕາມມະຕິ ສະບັບເລກທີ 009/ສປນວ, ລົງວັນທີ 15 ກຸມພາ 2023 ເຊິ່ງໃນ 6 ເດືອນຕົ້ນປີ 2023 ວຽກງານທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການພັດທະນາສີມືແຮງງານໃຫ້ຜູ້ບໍ່ມີອາຊີບ, ຜູ້ວ່າງງານ, ຜູ້ຕ້ອງການປ່ຽນອາຊີບ ແລະ ຜູ້ທີ່ຈະເຂົ້າສູ່ຕຳແໜ່ງງານໃໝ່ ແມ່ນປະຕິບັດໄດ້ 2.799 ຄົນ ຍິງ 1.828 ຄົນ ລື່ນແຜນການປີ 1.759 ຄົນ; ດ້ານການສົ່ງເສີມການຈັດຫາວຽກເຮັດງານທຳໃຫ້ແຮງງານທີ່ຕ້ອງການມີວຽກເຮັດງານທຳໃຫ້ເຂົ້າສູ່ຕະຫຼາດແຮງງານ ປະຕິບັດໄດ້ 2.674 ຄົນ ຍິງ 1.787 ຄົນ ເທົ່າກັບ 59.42% ຂອງແຜນການປີ. ດ້ານການຄວບຄຸມອັດຕາການວ່າງງານຢູ່ໃນລະດັບ 0,8%, ປະຕິບັດລື່ນແຜນ 0,7% ຂອງແຜນການປີ; ໄດ້ຂະຫຍາຍອັດຕາປົກຄຸມປະກັນສັງຄົມ ປະຕິບັດໄດ້ 160 ຄົນ, ຍິງ 85 ຄົນ ເທົ່າກັບ 61,53% ຂອງແຜນການປີ; ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ປະຕິບັດໄດ້ 17 ທ່ານ ເທົ່າກັບ 54,83% ຂອງແຜນການປີ ແລະ ໄດ້ຊ່ວຍເຫຼືອຜູ້ອອກຢາເສບຕິດດ້ວຍການຝຶກອົບຮົມວິຊາຊີບ ແລະ ສ້າງໂອກາດມີວຽກເຮັດງານທຳ ໄດ້ 53 ຄົນ ເທົ່າກັບ 53% ຂອງແຜນການປີ. ຄຽງຄູ່ກັບການລາຍງານຜົນສຳເລັດນັ້ນ ກໍຍັງມີຂໍ້ຄົງຄ້າງຫຼາຍດ້ານ ເປັນຕົ້ນແມ່ນການພັດທະນາສີມືແຮງງານ ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ, ດ້ານງົບປະມານນຳໃຊ້ໃນວຽກການດັ່ງກ່າວ ຍັງບໍ່ພຽງພໍ; ການໂຄສະນາເຜີຍແຜ່ກົດໝາຍ, ລະບຽບການກ່ຽວກັບວຽກງານແຮງງານ ແລະ ການສ້າງຄວາມເຂົ້າໃຈໃຫ້ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ໃນພາກວິສາຫະກິດ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດກວ້າງຂວາງ; ການຄຸ້ມຄອງວຽກງານສັງຄົມສົງເຄາະ ແລະ ໄພພິບັດ ຍັງບໍ່ທັນເຂັ້ມແຂງ ເປັນຕົ້ນແມ່ນການຊ່ວຍເຫຼືອສຸກເສີນໃຫ້ແກ່ຜູ້ປະສົບໄພພິບັດຕ່າງໆ ຍັງຊັກຊ້າ.

ໂອກາດດັ່ງກ່າວ, ທ່ານ ນາງ ລຳພອຍ ສີອັກຄະຈັນ ໄດ້ມີຄຳເຫັນຊີ້ນຳຕໍ່ກອງປະຊຸມ ພ້ອມທັງມີຄຳເຫັນແລກປ່ຽນຕໍ່ບັນດາຂໍ້ຄົງຄ້າງຕ່າງໆ ແລະ ໃນຕອນທ້າຍກອງປະຊຸມ ກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການນຳຂອງພະແນກ, ທຸກຂະແໜງການກ່ຽວຂ້ອງ ທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍທີ່ໄດ້ກຳນົດໄວ້ໃຫ້ບັນລຸຜົນ ແລະ ສຳເລັດຕາມແຜນການປະຈຳປີ 2023 ທີ່ວາງໄວ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ຕອນບ່າຍຂອງວັນດຽວກັນ, ທ່ານ ນາງ ລຳພອຍ ສີອັກຄະຈັນ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວຢ້ຽມຢາມ ບໍລິສັດ ສີຣິວັດທະນາ ອິນເຕີເນຊັນນໍ 2005 ກຳຈັດຜູ້ດຽວ ເຊິ່ງເປັນໂຮງງານຜະລິດປຶ້ມກາຕູນແຫ່ງດຽວໃນ ສປປ ລາວ ຜະລິດສົ່ງອອກຕ່າງປະເທດ 100%.



# ຄະນະພັກຮາກຖານ ສພຂ ເຊກອງ ດຳເນີນກອງປະຊຸມກາງສະໄໝ ຄັ້ງທີ I

(ສພຊ) ວັນທີ 15-16 ພຶດສະພາ 2023 ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ, ຄະນະພັກຮາກຖານ ສພຂ ເຊກອງ ໄດ້ດຳເນີນກອງປະຊຸມກາງສະໄໝຄັ້ງທີ I ເຊິ່ງເຂົ້າຮ່ວມເປັນປະທານໂດຍສະຫາຍ ເຫຼັກໄຫຼ ສີວິໄລ ເລຂາພັກແຂວງ, ເຈົ້າແຂວງ ແຂວງເຊກອງ, ມີສະຫາຍ ດົງເພັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ສະຫາຍ ປອ. ແພງສີ ສີລະວົງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ສະຫາຍ ນາງ ຄຳເສັງ ທຸມມະວົງສາ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານ, ຮອງປະທານສະພາປະຊາຊົນແຂວງ, ມີຄະນະພັກຮາກຖານ, ຄະນະໜ່ວຍພັກ, ຫົວໜ້າ-ຮອງຈຸຫົວໜ້າ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ວາລະດຳເນີນກອງປະຊຸມ, ຄະນະພັກຮາກຖານ ແລະ ຂະແໜງການທີ່ກ່ຽວຂ້ອງໄດ້ເຜີຍແຜ່ເຊື່ອມຊຶມບັນດານິຕິກຳຕ່າງໆ ກ່ຽວກັບການດຳເນີນກອງປະຊຸມຄົບຄະນະກາງສະໄໝ ເປັນຕົ້ນແມ່ນຄຳສັ່ງເພີ່ມເຕີມຂອງຄະນະປະຈຳພັກແຂວງວ່າດ້ວຍການດຳເນີນກອງປະຊຸມກາງສະໄໝຄົບຄະນະບໍລິຫານງານກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ, ຄຳສັ່ງແນະນຳຂອງຄະນະຈັດຕັ້ງແຂວງ ວ່າດ້ວຍການຈັດຕັ້ງປະຕິບັດຜ່ານຄຳສັ່ງເພີ່ມເຕີມຂອງຄະນະປະຈຳພັກແຂວງວ່າດ້ວຍການດຳເນີນກອງປະຊຸມກາງສະໄໝຄົບຄະນະບໍລິຫານງານກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ, ມາດຖານຂອງພະນັກງານນຳພາ-ຄຸ້ມຄອງ, 6 ມາດຖານ 11 ຂໍ້ຫ້າມຂອງສະມາຊິກພັກ, ສິດ ແລະ ໜ້າທີ່ຂອງຄະນະພັກແຕ່ລະຂັ້ນ ແລະ ຍັງໄດ້ເຊື່ອມຊຶມມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030 ວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ. ພ້ອມນັ້ນ, ຄະນະພັກຮາກຖານ ຍັງໄດ້ສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ ໃນໄລຍະ 2 ປີເຄິ່ງຜ່ານມາ ແລະ ວາງທິດທາງແຜນການທ້າຍສະໄໝໃນຕໍ່ໜ້າ ພ້ອມທັງດຳເນີນຊີວິດການເມືອງ, ທາບທາມຄວາມເຊື່ອໝັ້ນໄວ້ວາງໃຈຂອງສະມາຊິກພັກ ຕໍ່ບຸກຄົນໃນຄະນະພັກ, ສຳຫຼວດການນຳພາລວມຂອງຄະນະພັກຮາກຖານ ແລະ ບຸກຄົນໃນຄະນະພັກຮາກຖານ.

ທັງນີ້, ກໍເພື່ອເປັນການປະເມີນຄືນຄວາມຮັບຜິດຊອບການເມືອງຂອງຄະນະພັກ ກໍຄືບັນດາສະຫາຍຄະນະພັກຮາກຖານ ໃນໄລຍະຜ່ານມາ ເຊິ່ງຍົກໃຫ້ເຫັນຜົນງານດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ເພື່ອເປັນບ່ອນອີງໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດວຽກງານໃນຮາກຖານຂອງຕົນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.




# ປະທານສະພາປະຊາຊົນແຂວງອຸດົມໄຊ ເຂົ້າຮ່ວມພິທີມອບ-ຮັບໂຄງການກໍ່ສ້າງຮົ້ວໂຮງຮຽນ

(ສພຊ) ຕອນເຊົ້າຂອງອັງຄານວັນທີ 16 ພຶດສະພາ 2023 ຢູ່ທີ່ສະໂມສອນໂຮງຮຽນ ມສ. ນາຄົກ ເມືອງງາ ແຂວງອຸດົມໄຊ ໄດ້ຈັດພິທີມອບ-ຮັບການກໍ່ສ້າງຮົ້ວໂຮງຮຽນ ມສ ນາຄົກ; ເຂົ້າຮ່ວມໂດຍມີທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ທ່ານ ບຸນທີ ໄຊຍະວົງ ປະທານອົງການກວດກາເມືອງງາ, ມີສະມາຊິກສະພາປະຊາຊົນແຂວງ, ອົງການປົກຄອງບ້ານ, ຄູ-ອາຈານ ແລະ ນ້ອງນັກຮຽນເຂົ້າຮ່ວມຢ່າງພ້ອມພຽງ.



ໂຄງການກໍ່ສ້າງຮົ້ວໂຮງຮຽນ ມສ. ນາຄົກ ແມ່ນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ໄດ້ລະດົມທຶນຊ່ວຍເຫຼືອຈາກຄອບຄົວທ່ານ ເບັ່ງມົວ ມົວໄຊຈູ ນັກທຸລະກິດຢູ່ນະຄອນຫຼວງວຽງຈັນ ລວມມູນຄ່າ 27.854.000 ກີບ ເຊິ່ງທ່ານ ຄຳພັດ ຕະວິລົມ ນັກທຸລະກິດບ້ານນາຄົກ ເປັນຜູ້ຮັບເໝົາກໍ່ສ້າງ ໜ້າວຽກປະກອບມີ: ການລົງເສົາເບຕົງເສີມເຫຼັກ, ວາງຕາໜ່າງ, ສາຍໜາມຫົວເສົາ, ເທຖານຕີນເສົາທັບຕາໜ່າງ, ໃສ່ປະຕູເລື່ອນກວ້າງ 4 ແມັດ ແລະ ເລີ່ມລົງມືການກໍ່ສ້າງມາແຕ່ວັນທີ 10 ມັງກອນ 2023 ແລະ ສຳເລັດໃນ 20 ມີນາ 2023 ຈຶ່ງຈັດພິທີມອບ-ຮັບຢ່າງເປັນທາງການໃນຄັ້ງນີ້.

ໃນໂອກາດນີ້, ຄະນະທີມງານໄດ້ລົງກວດກາຄວາມສຳເລັດຕົວຈິງຂອງການກໍ່ສ້າງຮົ້ວດັ່ງກ່າວຕື່ມອີກ.

**(ແສງພອນ ອິນນະລົງ)**

## ສະຫຼຸບຂະບວນການແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022



(ສພຊ) ໃນວັນທີ 19 ພຶດສະພາ 2023 ກຳມະບານຮາກຖານສະພາປະຊາຊົນແຂວງອັດຕະປື ໄດ້ເປີດພິທີສະຫຼຸບຂະບວນການແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022 ທີ່ຫ້ອງປະຊຸມຂອງຕຶກ ພາຍໃຕ້ການເປັນປະທານຂອງ ສະຫາຍ ແສງປະດິດ ສຸດນາມສຸລິນ ປະທານກຳມະບານຮາກຖານສະພາປະຊາຊົນອັດຕະປື; ເຂົ້າຮ່ວມໂດຍສະຫາຍ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ສະຫາຍ ພູສຽງ ເຫຼື່ອມມະໄລສີ ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານແຂວງອັດຕະປື, ມີບັນດາສະຫາຍຄະນະໜ່ວຍພັກຮາກຖານ, ສະມາຊິກກຳມະບານຮາກຖານສະພາປະຊາຊົນແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມທັງໝົດ 43 ສະຫາຍ ຍິງ 15 ສະຫາຍ.

ໃນພິທີ, ສະຫາຍ ແສງປະດິດ ສຸດນາມສຸລິນ ໄດ້ຂຶ້ນຜ່ານບົດສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານຮາກຖານສະພາປະຊາຊົນແຂວງອັດຕະປືປະຈຳປີ 2022 ເຊິ່ງຜ່ານມາ ກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ສຶກສາອົບຮົມທາງດ້ານການເມືອງ-ແນວຄິດໃຫ້ແກ່ສະມາຊິກກຳມະບານທີ່ຢູ່ໃນຖັນແຖວ ໃຫ້ມີຄວາມຈົ່ງຮັກພັກດີຕໍ່ພັກ, ເຄົາລົບ ແລະ ນັບຖືການຈັດຕັ້ງ. ສາມາດສະກັດກັ້ນໄດ້ປາກົດການຫຍໍ້ທໍ້ຕ່າງໆ; ມີທັດສະນະມະຫາຊົນກ້ວາງຂວາງ ເປັນແບບຢ່າງທີ່ດີໃຫ້ແກ່ໝູ່ເພື່ອນ ແລະ ບໍ່ຫຼົງກິນຟູມເຟືອຍ; ມີຄວາມອຸ່ນອ່ຽນ, ທຸ່ນທ່ຽງ ໃນການປະຕິບັດໜ້າທີ່ວຽກງານ, ມີນ້ຳໃຈຮັກຊາດ-ຮັກລະບອບປະຊາທິປະໄຕອັນແທ້ຈິງ, ມີນ້ຳໃຈເສຍສະຫຼະ, ດຳລົງຊີວິດປອດໃສ, ບໍ່ສໍ້ໂກງ, ບໍ່ສວຍໂອກາດ-ສວຍໃຊ້ໜ້າທີ່ຕຳແໜ່ງ; ຮູ້ຈຳແນກມິດສັດຕູຢ່າງຈະແຈ້ງ, ເດັດດ່ຽວຕອບຕ້ານທຸກກົນອຸບາຍມ້າງເພຂອງສັດຕູ, ຕ້ານທຸກປາກົດການຫຍໍ້ທໍ້ຕ່າງໆໄດ້ເປັນຢ່າງດີ; ໄດ້ນຳເອົາແນວທາງນະໂຍບາຍ, ມະຕິຄຳສັ່ງຕ່າງໆຂອງພັກ ໂດຍສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງສູນກາງພັກ ແລະ ຂອງອົງຄະນະພັກແຂວງ; ກົດໝາຍຂອງລັດ, ເອກະສານມູນເຊື້ອປະຫວັດສາດທີ່ສຳຄັນຂອງພັກ-ລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຈຳນວນ 12 ສະບັບ ແລະ ສະໄໝສາມັນເທື່ອທີ 3 ຈຳນວນ 6 ສະບັບ ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ເນື້ອໃນ 2 ວາລະແຫ່ງຊາດ ມາຈັດຕັ້ງເຊື່ອມຊຶມໃຫ້ພະນັກງານລັດຖະກອນ ກໍຄືສະມາຊິກກຳມະບານໄດ້ເຂົ້າຮ່ວມຮັບຟັງ; ເຂົ້າຮ່ວມຮັບຟັງປາຖະກະຖາວັນສຳຄັນຕ່າງໆ ເຮັດໃຫ້ສະມາຊິກພວກເຮົາ ມີທັດສະນະການເມືອງໜັກແໜ້ນ ເຊື່ອໝັ້ນຕໍ່ແນວທາງລວມຂອງພັກ; ຖືເອົາວຽກງານບຳລຸງກໍ່ສ້າງຍົກລະດັບຄວາມຮູ້ຄວາມສາມາດດ້ານວຽກງານວິຊາສະເພາະ ແລະ ຮຽນທິດສະດີການເມືອງຈຳນວນ 1 ສະຫາຍ, ປະລິນຍາໂທ ຢູ່ນະຄອນດານັງ ສສ.ຫວຽດນາມ 1 ສະຫາຍ ເຊິ່ງໄດ້ຈັດຕັ້ງປະຕິບັດ 5 ຂໍ້ແຂ່ງຂັນຕາມເນື້ອໃນຂໍ້ແຂ່ງຂະບວນການ 5 ເປັນເຈົ້າໄດ້ 90% (ແຜນວາງໄວ້ 94%). ຈາກນັ້ນ, ຍັງໄດ້ມອບໃບຢັ້ງຢືນ 5 ເປັນເຈົ້າໃຫ້ກົມກອງ ແລະ ຍ້ອງຍໍບຸກຄົນດີເດັ່ນໃນການຈັດຕັ້ງປະຕິບັດວຽກງານ ກຳມະການ ປະເພດ I ມີ 49 ສະຫາຍ ຍິງ 21 ສະຫາຍ, ປະເພດ II ມີ 4 ສະຫາຍ ຍິງ 3 ຫາຍ, ພ້ອມພາກັນຈັບມືເປີດຂະບວນການຂໍ້ແຂ່ງຂັນ 5 ເປັນເຈົ້າປະຈຳສົກປີ 2023 ຢ່າງເປັນທາງການ.

ຕອນທ້າຍກອງປະຊຸມກໍໄດ້ຮັບຟັງການໂອ້ລົມຂອງສະຫາຍ ນາງ ມີນາພອນ ໄຊສົມພູ ແລະ ສະຫາຍ ພູສຽງ ເຫຼື່ອມມະໄລສີ ເຊິ່ງໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນງານທີ່ກຳມະບານຮາກຖານສະພາປະຊາຊົນແຂວງ ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມດຽວກັນ, ທ່ານໄດ້ເນັ້ນໃຫ້ຄະນະກຳມະບານຮາກຖານສະພາປະຊາຊົນແຂວງ ສືບຕໍ່ໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກກຳມະບານ, ພະນັກງານ-ລັດຖະກອນ ພາຍໃນຮາກຖານ, ສືບຕໍ່ຮັກສາມູນເຊື້ອ, ມີຫົວຄິດປະດິສ້າງອັນໃໝ່ໆໃນການຈັດຕັ້ງວຽກງານ, ຮັດແໜ້ນເຕົ້າໂຮມຄວາມສາມັກຄີຮັກແພງເປັນປຶກແຜ່ນແໜ້ນໜາໃຫ້ແກ່ພັກ-ລັດ ກໍຄືການຈັດຕັ້ງຂອງຕົນ, ຕີຖອຍປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນຢ່າງຕັ້ງໜ້າ ພ້ອມທັງຍູ້ແຮງແຜນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນເນື້ອໃນ 5 ເປັນເຈົ້າ ປະຈຳປີ 2023 ຂອງກຳມະບານຮາກຖານສະພາປະຊາຊົນແຂວງ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ໄ.



**(ສພຂ ອັດຕະປື)**

## ມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ປາຖະກະຖາວັນສຳຄັນຂອງພັກ-ຂອງຊາດ





(ສພຊ) ໃນວັນທີ 24 ພຶດສະພາ 2023 ທີ່ສະພາປະຊາຊົນແຂວງຊຽງຂວາງ ໄດ້ມີພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ໂດຍການເປັນປະທານຂອງສະຫາຍບຸນໂຮມ ເທດທານີ ຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງ, ມີຄະນະພັກສະພາປະຊາຊົນແຂວງ, ສະມາຊິກພັກສົມບູນ ແລະ ສຳຮອງເຂົ້າຮ່ວມ.

ໃນພິທີໄດ້ຜ່ານມະຕິຂອງຄະນະບໍລິຫານງານພັກແຂວງ ສະບັບເລກທີ 45/ຄປພຂ, ລົງວັນທີ 20 ມິຖຸນາ 2023 ວ່າດ້ວຍການຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ຂອງບັນດາໜ່ວຍພັກຮາກຖານ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານພັກອ້ອມຂ້າງແຂວງ, ໜ່ວຍພັກສະພາປະຊາຊົນແຂວງມີສະມາຊິກພັກທັງໝົດ 33 ສະຫາຍ ຍິງ 16 ສະຫາຍ ເຊິ່ງໜ່ວຍພັກສະພາປະຊາຊົນແຂວງໄດ້ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນປີທີ 5 ຕິດຕໍ່ກັນ ໂດຍການກ່າວມອບຂອງສະຫາຍ ບຸນໂຮມ ເທດທານີ ຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງ ແລະ ກ່າວຮັບໂດຍສະຫາຍ ແສງເດືອນ ຈັນທະລັງສີ ເລຂາໜ່ວຍພັກສະພາປະຊາຊົນແຂວງ.

ໃນໂອກາດນີ້, ສະຫາຍ ບຸນໂຮມ ເທດທານີ ໄດ້ຍ້ອງຍໍຊົມເຊີຍຕໍ່ໜ່ວຍພັກສະພາປະຊາຊົນແຂວງທີ່ສາມາດຍາດມາໄດ້ ແລະ ມີຄຳເຫັນໂອ້ລົມຕໍ່ພິທີ ກໍຄືສະມາຊິກພັກ-ພະນັກງານສະພາປະຊາຊົນແຂວງ ເນັ້ນໃຫ້ພະນັກງານສະພາປະຊາຊົນແຂວງ ຈົ່ງຕັ້ງໜ້າສຶກສາອົບຮົມການເມືອງ-ແນວຄິດຂອງພະນັກງານ, ສືບຕໍ່ຮັກສາມູນເຊື້ອໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນມີຖຸນທາດການເມືອງໜັກແໜ້ນ, ໃຫ້ມີສະຕິຕໍ່ການຈັດຕັ້ງ, ປັບປຸງແບບແຜນວິທີເຮັດວຽກ, ແບບແຜນວິທີດຳລົງຊີວິດ, ມີການຕຳນິສິ່ງຂ່າວກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນ, ຮັກສາມູນເຊື້ອຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນກວ່າເກົ່າ ແລະ ຈົ່ງສຶກສາຮ່ຳຮຽນຊອກຫາຄວາມຮູ້ ເພື່ອມາພັດທະນາຕົນເອງໃຫ້ມີຄວາມຮູ້ຄວາມສາມາດໃນການປະຕິບັດໜ້າທີ່ວຽກງານໃຫ້ໄດ້ດີກວ່າເກົ່າ.

ໃນວັນດຽວກັນນີ້, ຢູ່ທີ່ສະພາປະຊາຊົນແຂວງຊຽງຂວາງ ຍັງໄດ້ຈັດພິທີປາຖະກະຖາວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນຊຽງຂວາງ ຄົບຮອບ 64 ປີ ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາທ່ານຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ ໂດຍການເປັນປະທານຂອງທ່ານບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ບັນດາທ່ານຄະນະຮັບຜິດຊອບໄດ້ຜັດປ່ຽນຂຶ້ນບັນຍາຍເອກະສານ 2 ວັນສຳຄັນດັ່ງກ່າວ ຄື: ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນຊຽງຂວາງ ຄົບຮອບ 64 ປີ ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາທ່ານຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ ເພື່ອເປັນການໂຄສະນາ-ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ-ພະນັກງານຂອງສະພາປະຊາຊົນແຂວງຮັບຮູ້ ແລະ ເຂົ້າໃຈກ່ຽວກັບມູນເຊື້ອວັນປະຫວັດສາດ, ມູນເຊື້ອພິລະອາດຫານຂອງບັນດາທ່ານຜູ້ນຳພັກ ແລະ ແນວລາວຮັກຊາດທີ່ສາມາດຜ່າວົງປິດລ້ອມສັດຕູຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນແຂວງຊຽງຂວາງອອກສູ່ເຂດທີ່ໝັ້ນໄດ້ຢ່າງປອດໄພ ແລະ ເພື່ອຮັບຮູ້, ເຂົ້າໃຈຄວາມປີຊາສາມາດ, ຄວາມສະຫຼາດສະຫຼຽວຂອງທ່ານຜູ້ນຳເຮົາທີ່ໄດ້ໂຕນຄຸກອອກຈາກໂພນເຄັງ ໄປສູ່ເຂດທີ່ໝັ້ນຂອງການປະຕິວັດໄດ້ຢ່າງປອດໄພ.

**(ນາງ ສຸກສະຫວັນ ອິນທະແສງ)**



## ສພຂ ຫົວພັນ ສະຫຼຸບການແຂ່ງຂັນຮັກຊາດ ແລະ ພັດທະນາ




(ສພຊ) ວັນທີ 19 ພຶດສະພາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດພິທີສະຫຼຸບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 5 ປີ (2016-2020) ແລະ ປະກາດເນື້ອໃນຮັກຊາດ ແລະ ພັດທະນາ ຮອດປີ 2025 ຂອງ ສພຂ ຫົວພັນ ໂດຍການເຂົ້າຮ່ວມ ແລະ ເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນ; ມີສະມາຊິກສະພາປະຊາຊົນແຂວງຫົວພັນ ຊຸດທີ I ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ທ່ານ ສຸກມີໄຊ ສິງບຸນເຮືອງ ຮອງເລຂາທິການ ສພຂ ຕາງໜ້າໃຫ້ຄະນະຮັບຜິດຊອບ ໄດ້ຂຶ້ນຜ່ານບົດສະຫຼຸບຜົນງານ 5 ປີ (2016-2020) ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ທິດທາງແຜນການໃນຕໍ່ໜ້າເພື່ອເປັນການສະຫຼຸບຕີລາຄາຄືນຜົນງານການເຄື່ອນໄຫວໃນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາໄລຍະ 5 ປີຜ່ານມາ ເຊິ່ງໄດ້ຍົກໃຫ້ເຫັນຜົນງານການເຄື່ອນໄຫວມີທັງດ້ານດີ ແລະ ດ້ານອ່ອນຂໍ້ຄົງຄ້າງທີ່ຈະຕ້ອງໄດ້ພ້ອມກັນສືບຕໍ່ປັບປຸງ ແລະ ແກ້ໄຂໃນຕໍ່ໜ້າ ເຊິ່ງບັນດາຜົນສຳເລັດດັ່ງກ່າວສະແດງອອກ ຄື: ສະມາຊິກສະພາປະຊາຊົນແຂວງ ຊຸດທີ I ແລະ ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງ ໄດ້ຮັບການຍ້ອງຍໍໃນຂັ້ນຕ່າງໆ ເຊັ່ນ: ບຸກຄົນໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ຈຳນວນ 12 ທ່ານ ຍິງ 2 ທ່ານ, ຫຼຽນໄຊແຮງງານ ຊັ້ນ III ຈຳນວນ 20 ທ່ານ ຍິງ 7 ທ່ານ, ຫຼຽນກາແຮງງານ ຈຳນວນ 7 ທ່ານ ແລະ ໄດ້ຮັບໃບຍ້ອງຍໍລັດຖະບານ ຈຳນວນ 4 ທ່ານ ຍິງ 3 ທ່ານ.

ໃນໂອກາດນີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ, ທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ສົມສັກ ດອນຈານິດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໄດ້ມີການຜັດປ່ຽນກັນປະດັບການຍ້ອງຍໍ ແລະ ມອບໃບຍ້ອງຍໍໃຫ້ຜູ້ທີ່ຮັບການຍ້ອງຍໍຢ່າງສົມກຽດ.

ຕອນທ້າຍພິທີ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດຂອງບັນດາທ່ານ ໃນການປະຕິບັດໜ້າທີ່ວຽກງານປະກອບສ່ວນສຳຄັນເຂົ້າໃນວຽກງານຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໄລຍະ 5 ປີ (2016-2020) ຜ່ານມາ. ພ້ອມນີ້, ທ່ານໄດ້ເນັ້ນໃຫ້ຄະນະພັກຄະນະນຳ ສພຂ ຈົ່ງໄດ້ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ, ເຕົ້າໂຮມຄວາມສາມັກຄີໃຫ້ເປັນປຶກແຜ່ນແໜ້ນໜາ ແລະ ເພີ່ມທະວີຄວາມຮັບຜິດຊອບໜ້າທີ່ການເມືອງຂອງທຸກຂະແໜງການພາຍໃນສະພາໃຫ້ສູງຂຶ້ນ, ພ້ອມກັນສູ້ຊົນບຸກບືນຜ່ານຜ່າຂໍ້ຫຍຸ້ງຍາກສິ່ງທ້າທາຍຕ່າງໆ, ເປັນເຈົ້າການຈັດຕັ້ງປະຕິບັດທິດທາງແຜນການຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ປີ 2025 ຂອງ ສພຂ ຫົວພັນ ໃຫ້ມີຜົນສຳເລັດບັນລຸຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ໂອກາດດຽວກັນນີ້, ຄະນະພັກ, ຄະນະນຳຂອງ ສພຂ ຫົວພັນ ໄດ້ພ້ອມກັນຈັບມື ແລະ ປະກາດເນື້ອໃນຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາແຕ່ນີ້ຮອດປີ 2025 ໃຫ້ມີຜົນສຳເລັດຢ່າງຈົບງາມ.

**(ເອີນ ແກ້ວບຸນມີ)**

## ກອງປະຊຸມສະໄໝວິສາມັນຄັ້ງທີ 3 ຂອງສະພາປະຊາຊົນແຂວງ ຫຼວງນ້ຳທາ

(ສພຊ) ກອງປະຊຸມສະໄໝວິສາມັນຄັ້ງທີ 3 ຂອງສະພາປະຊາຊົນແຂວງຫຼວງນ້ຳທາໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນທີ 23 ພຶດສະພາ 2023 ທີ່ສະໂມສອນຂອງແຂວງຫຼວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ວຽງສະຫວັດ ສີພັນດອນ ເລຂາພັກແຂວງ, ເຈົ້າແຂວງ ແຂວງຫຼວງນ້ຳທາ; ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ອະດີດການນຳຂອງແຂວງ-ອະດີດສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານເຈົ້າເມືອງ, ພະແນກການ, ສອງກອງບັນຊາການຂອງແຂວງ ພ້ອມດ້ວຍບັນດາທ່ານແຂກທີ່ຖືກເຊີນເຂົ້າຮ່ວມທັງໝົດ 100 ກວ່າທ່ານ.



ກອງປະຊຸມສະໄໝວິສາມັນຄັ້ງທີ 3 ຂອງສະພາປະຊາຊົນແຂວງ ໄດ້ດຳເນີນຂຶ້ນເປັນເວລາເຄິ່ງວັນ ຢ່າງເຄັ່ງຮ້ອນແຫ່ງການເສີມຂະຫຍາຍສິດປະຊາທິປະໄຕ ແລະ ຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງຜູ້ແທນກອງປະຊຸມ ແລະ ກອງປະຊຸມຄັ້ງນີ້ ໄດ້ຮັບຟັງການລາຍງານ ແລະ ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ຄື: ໄດ້ຮັບຟັງການລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການພິຈາລະນາ, ຮັບຮອງເອົາຮອງເຈົ້າແຂວງ, ປະທານອົງການກວດກາລັດແຂວງ, ເຈົ້າເມືອງ ແລະ ຫົວໜ້າອົງການໄອຍະການປະຊາຊົນ ເຂດ-1 ແຂວງຫຼວງນ້ຳທາ ໃນໄລຍະທີ່ສະພາປະຊາຊົນແຂວງ ບໍ່ໄດ້ດຳເນີນກອງປະຊຸມສະໄໝສາມັນ ແລະ ວິສາມັນຂອງສະພາປະຊາຊົນແຂວງ; ໄດ້ພິຈາລະນາ, ຮັບຮອງເອົາບຸກຄະລາກອນຂອງແຂວງຕາມການສະເໜີຂອງເຈົ້າແຂວງ ຈຳນວນ 6 ທ່ານ; ພິຈາລະນາ ຮັບຮອງເອົາການສະເໜີຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ຄຳລາ ຂານສະຫງ່າ ກຳມະການພັກແຂວງ, ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ; ພິຈາລະນາຮັບຮອງເອົາການສະເໜີ ຍົກຍ້າຍທ່ານ ຄຳເພັດ ຈັນທະວົງ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການແຂວງ ໄປຮັບໜ້າທີ່ໃໝ່ຢູ່ເມືອງລອງ; ພິຈາລະນາຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ພູນແກ້ວ ເຫຼົາອິນ ກຳມະການພັກແຂວງ, ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານເປັນຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ; ພິຈາລະນາຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ວັນທາ ພົມວິໄລ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ; ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງທ່ານ ຕຽງສະໝອນ ພອນປະເສີດ ກຳມະການພັກແຂວງ, ເປັນຫົວໜ້າພະແນກສາທາລະນະສຸກແຂວງ ແລະ ພິຈາລະນ ຍົກຍ້າຍທ່ານ ບຸນມາ ພັນດາວົງ ກຳມະການພັກແຂວງ ເປັນຫົວໜ້າຫ້ອງວ່າການແຂວງ; ພ້ອມດຽວກັນ, ຜູ້ແທນກອງປະຊຸມຍັງໄດ້ມີຄຳເຫັນຕໍ່ກັບບຸກຄະລາກອນຂອງແຂວງ ທີ່ໄດ້ຮັບຮອງເອົາໃນກອງປະຊຸມຄັ້ງນີ້ ແລະ ໄດ້ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງເອກະພາບ.



(ສພຊ) ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ທີ່ສັງກັດກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ເມື່ອວັນທີ 16 ພຶດສະພາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ພາຍໃຕ້ການເປັນປະທານຂອງທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 13, ຄະນະກຳມະການ,

## ການເຄື່ອນໄຫວວຽກງານຂອງ ສສຊ ເຂດ 13



ພະແນກການອ້ອມຂ້າງແຂວງ ແລະ ວິຊາການຈຳນວນໜຶ່ງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ແມ່ນແນໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດ, ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໂດຍລົງເລິກວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ເພື່ອຊອກໃຫ້ເຫັນຜົນສຳເລັດ, ຂໍ້ຄົງຄ້າງ, ສິ່ງທ້າທາຍ ແລະ ສາເຫດບັນຫາເຄັ່ງຮ້ອນໃນການຈັດຕັ້ງປະຕິບັດການປົກປ້ອງສັງຄົມ ຢູ່ພາຍໃນທ້ອງຖິ່ນ ໂດຍສະເພາະການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ, ກົດໝາຍວ່າດ້ວຍປະກັນສຸຂະພາບແຫ່ງຊາດ, ກົດໝາຍວ່າດ້ວຍສາທາລະນະສຸກ ເຊິ່ງເຫັນໄດ້ວ່າບັນດາທ່ານ ສສຊ ເຂດ 13 ໄດ້ປະກອບຄຳຄິດຄຳເຫັນແລກປ່ຽນກັບບັນດາຂະແໜງການ ດ້ວຍຄວາມຮັບຜິດຊອບສູງ ໃນນັ້ນບັນຫາສຳຄັນແມ່ນກົນໄກການຄຸ້ມຄອງ-ນຳໃຊ້ກອງທຶນປະກັນສັງຄົມໃນໄລຍະຜ່ານມາ ເຫັນໄດ້ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ.

ໃນໂອກາດດັ່ງກ່າວ, ປະທານກອງປະຊຸມໄດ້ສະແດງຄວາມຊົມເຊີຍ ແລະ ຊຸກຍູ້ໃຫ້ຂະແໜງການທີ່ກ່ຽວຂ້ອງ ເອົາໃຈໃສ່ໃນການບໍລິການປະຊາຊົນ ໂດຍສະເພາະບັນຫາປະກັນສຸຂະພາບຂອງປະຊາຊົນລາວບັນດາເຜົ່າ ຜູ້ທີ່ທຸກຍາກ ແລະ ຂາດເຂີນ ໃນການເຂົ້າມາປິ່ນປົວຢູ່ໂຮງໝໍນັ້ນດ້ວຍ.

ລະຫວ່າງວັນທີ 16-18 ພຶດສະພາ 2023 ສສຊ ປະຈຳເຂດເລືອກຕັ້ງທີ 13 ນຳໂດຍທ່ານ ສະແຫວງ ນັນທະວົງ ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການປັບປຸງສ້ອມແປງຝາຍນາເຕີ້ ເມືອງວິລະບູລີ ແຂວງສະຫວັນນະເຂດ, ຮ່ວມກັບບັນດາທ່ານສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງວິລະບູລີ, ບັນທ່ານການນຳຂອງເມືອງ ແລະ ຂະແໜງການກ່ຽວຂ້ອງປະຈຳເມືອງອີກດ້ວຍ.




## ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ

**ມາດຕາ 53 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ທີ່ສ້າງຄວາມເສຍຫາຍແກ່ລັດ ແລະ ສັງຄົມ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງບໍລິຫານອື່ນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ/ ຫຼື ຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ. ສຳລັບການລົງວິໄນ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 54 (ປັບປຸງ) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຈາກອົງການທີ່ກ່ຽວຂ້ອງ ພ້ອມທັງບັນທຶກເປັນລາຍລັກອັກສອນ. ສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ນອກຈາກຈະຖືກສຶກສາອົບຮົມຈາກອົງການທີ່ກ່ຽວຂ້ອງ ແລ້ວຍັງຈະຖືກສຶກສາອົບຮົມຈາກການຈັດຕັ້ງທີ່ຕົນສັງກັດຢູ່ຕື່ມອີກ.

ອ່ານຕໍ່ສະບັບໜ້າ

## ຈົ່ງພ້ອມກັນ...

(ຕໍ່ຈາກໜ້າ 1)

ລົງຊີວິດຂອງປະຊາຊົນ, ການຄົງຕົວ ແລະ ຂະຫຍາຍຕົວຂອງປະເທດຊາດ.

ການຈັດກິດຈະກຳປູກຕົ້ນໄມ້ ຕິດພັນກັບການສະເຫຼີມສະຫຼອງວັນເດັກນ້ອຍສາກົນ ນັບແຕ່ປີ 1980 ເປັນຕົ້ນມາ, ກໍແມ່ນຂະບວນການໜຶ່ງທີ່ສຳຄັນຂອງປວງຊົນລາວທັງຊາດທີ່ເອົາໃຈໃສ່ປະກອບສ່ວນຈັດຕັ້ງປະຕິບັດຕາມ ມະຕິຕົກລົງຂອງສະພາລັດຖະມົນຕີສະບັບເລກທີ 48/ສລຖ, ລົງວັນທີ 9/2/1980 ວ່າດ້ວຍການກຳນົດເອົາວັນທີ 1 ມິຖຸນາ ເຊິ່ງກົງກັບວັນເດັກນ້ອຍສາກົນ ເປັນວັນປູກຕົ້ນໄມ້ແຫ່ງຊາດລາວ ໂດຍມີຈຸດປະສົງເພື່ອແນ່ໃສ່ປູກຈິດສຳນຶກໃຫ້ແກ່ອານຸຊົນ ແລະ ເຍົາວະຊົນຂອງຊາດ ກໍຄືລູກຫຼານຜູ້ເກີດໃໝ່ໃຫຍ່ລຸນ ໃຫ້ມີສະຕິຮັກ-ຫວງແຫນປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຸກລະດົມທົ່ວປວງຊົນເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເຮັດໃຫ້ປ່າໄມ້ມີຄວາມອຸດົມສົມບູນ, ເປັນເຫງົ້າພະລັງໃນການປົກປັກຮັກສາລະບົບນິເວດທຳມະຊາດ, ຊີວະນາໆພັນ, ແຫຼ່ງນ້ຳໃຫ້ຍືນຍົງຕະຫຼອດໄປ.

ການປູກຈິດສຳນຶກໃຫ້ເດັກນ້ອຍລາວບັນດາເຜົ່າ ກໍຄືຊາວໜຸ່ມ, ເຍົາວະຊົນ ແລະ ອານຸຊົນ ໃຫ້ຮັກ ແລະ ຫວງແຫນປ່າໄມ້ ຍັງເປັນການເນັ້ນໜັກທັດສະນະ ແລະ ຄວາມຮັບຮູ້ກ່ຽວກັບປ່າໄມ້ ອັນຖືກຕ້ອງຕາມທັດສະນະຂອງພັກເຮົາ ເຊິ່ງໃນນີ້ ທ່ານປະທານ ໄກສອນ ພົມວິຫານ ເຄີຍເນັ້ນໜັກ ໃນກອງປະຊຸມປ່າໄມ້ທົ່ວປະເທດ ຄັ້ງທີ I ເມື່ອວັນທີ 22-28/5/1989 ວ່າ: “ຮັກຊັບພະຍາກອນປ່າໄມ້ ກໍແມ່ນຮັກປະເທດຊາດ ແລະ ຮັກປະເທດຊາດ ກໍແມ່ນຮັກຊັບພະຍາກອນປ່າໄມ້” ທັງນີ້ກໍຍ້ອນວ່າ: ການຕໍ່ສູ້ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍໝາຍເຖິງການປົກປັກຮັກສາຊັບພະຍາກອນປ່າໄມ້, ຍ້ອນວ່າຊັບພະຍາກອນປ່າໄມ້ມີຄຸນປະໂຫຍດອັນໃຫຍ່ຫຼວງ ແລະ ໂດຍກົງຕໍ່ການດຳລົງຊີວິດ, ຕໍ່ຄວາມວັດທະນາຖາວອນ, ຕໍ່ການປົກປັກຮັກສາສິ່ງແວດລ້ອມຂອງປະເທດເຮົາ. ສະນັ້ນ, ເມື່ອເວົ້າເຖິງຄວາມຮັກປະເທດຊາດ ແມ່ນຕ້ອງເວົ້າເຖິງຄວາມຮັກຊັບພະຍາກອນປ່າໄມ້. ການທຳລາຍຊັບພະຍາກອນປ່າໄມ້ ກໍເປັນການທຳລາຍມູນມໍລະດົກຂອງຊາດ, ທຳລາຍທ່າແຮງຂອງປະເທດຊາດ, ທຳລາຍຄວາມວັດທະນາຖາວອນຂອງຊາດ. ການນຳໃຊ້ປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ຕ້ອງສົມເຫດສົມຜົນ ໃຫ້ຄຸ້ມຄ່າທີ່ສຸດ ແລະ ມີປະສິທິຜົນທີ່ສຸດ.

ໃນສະພາບຄວາມເປັນຈິງ, ການປູກຕົ້ນໄມ້ ເພື່ອຟື້ນຟູປ່າ ໄດ້ມີການເຄື່ອນໄຫວມາຍາວນານແລ້ວ ເຊິ່ງສະແດງອອກຈະແຈ້ງໃນໂຕເລກສະຖິຕິເນື້ອທີ່ປູກໄມ້ເພີ່ມຂຶ້ນຈາກ 452 ເຮັກຕາ ໃນປີ 1978 ມາເປັນ 1.384 ເຮັກຕາ ໃນປີ 1985, ປີ 2014 ມີເນື້ອທີ່ປ່າປູກ 428.709 ເຮັກຕາ ແລະ ປີ 2021 ມີປ່າປູກໄມ້ທັງໝົດ 529.758 ເຮັກຕາ. ເດັ່ນກວ່າໝູ່ແມ່ນການປູກໄມ້ວິກ, ໄມ້ສັກ ແລະ ໄມ້ເກດສະໜາ ຂອງຊາວກະສິກອນ ແລະ ນັກລົງທຶນ ຊຸມປີ 1990-2000, ຂະບວນການປູກໄມ້ຢາງພາລາຂອງນັກລົງທຶນ ແລະ ຊາວກະສິກອນ ໃນຊຸມປີ 2000-2014. ສະນັ້ນ, ນັບແຕ່ວັນທີ 1 ມິຖຸນາ 1975 ຫາ ວັນທີ 1 ມິຖຸນາ 2022 ການຈັດຕັ້ງປະຕິບັດວຽກງານປູກໄມ້ ໄດ້ທັງໝົດ 535.205 ເຮັກຕາ.

ນອກນີ້, ການປູກຕົ້ນໄມ້ຍັງເປັນການເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ ຕາມທີ່ພັກ-ລັດຖະບານ ເຮົາໄດ້ກຳນົດເປົ້າໝາຍໄວ້ ຈະຍົກລະດັບຄວາມປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດໃນປີ2025 (ໃນແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX) ເຊິ່ງໃນໄລຍະຜ່ານມາ, ເນື້ອທີ່ປົກຫຸ້ມຂອງປ່າໄມ້ ທີ່ເປີດເຜີຍໃນກອງປະຊຸມປ່າໄມ້ທົ່ວປະເທດ ຄັ້ງທີ I ແມ່ນ 47%. ມາຮອດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ IX ຂອງພັກ, ໃນບົດປະກອບຄຳເຫັນຂອງກະຊວງກະສິກຳ ແລະ ປ່າໄມ້ ກໍໄດ້ໃຫ້ຮູ້ເນື້ອທີ່ປົກຫຸ້ມຂອງປ່າໄມ້ເພີ່ມຂຶ້ນມາເປັນ 53% ໃນປີ 2010, ຈາກ 41% ໃນປີ 2006; ເອກະສານເນື້ອໃນກອງປະຊຸມໃຫຍ່ຜູ້ແທນທົ່ວ ຄັ້ງທີ X ຂອງພັກ ກໍໄດ້ໃຫ້ຮູ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນມາເປັນ 58% ໃນປີ 2015 ແລະ ໃນແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX ກໍໄດ້ໃຫ້ຮູ້ວ່າເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນເປັນ 62% ຂອງເນື້ອທີ່ທົ່ວປະເທດ. ນີ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນເນື້ອທີ່ປົກຫຸ້ມຂອງປ່າໄມ້ ທີ່ໄດ້ມີການສຳຫຼວດຕາມກຳນົດທຸກໆ 5 ປີ ແມ່ນມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ. ເຖິງຢ່າງໃດກໍຕາມ, ຖ້າເບິ່ງອັດຕາການຂະຫຍາຍຕົວແລ້ວ ກໍເຫັນວ່າ ການຈະບັນລຸເປົ້າໝາຍທີ່ວາງໄວ້ 70% ຍັງມີຄວາມທ້າທາຍຢູ່.

ສະນັ້ນ, ໂອກາດວັນປູກຕົ້ນໄມ້ ໃນປີ 2023 ນີ້, ທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ ລວມທັງປະຊາຊົນລາວທຸກຄົນ ຈົ່ງພ້ອມກັນເປັນເຈົ້າການເພີ່ມສ່ວນຮ່ວມໃນການປູກຕົ້ນໄມ້ ປູກຜູ້ລະ 1-2 ຕົ້ນ ເພື່ອປະກອບສ່ວນປູກໄມ້ປີນີ້ ໃຫ້ບັນລຸຕາມແຜນການໃນວັນປູກຕົ້ນໄມ້ແຫ່ງຊາດ 3.480 ເຮັກຕາ ໃນທົ່ວປະເທດ. ນອກນີ້, ປະຊາຊົນ ກໍສາມາດປູກໃນເນື້ອທີ່ດິນເປົ່າວ່າງຂອງຕົນ, ໃນຮົ້ວ, ສວນ ແລະ ອື່ນໆ ຕາມເງື່ອນໄຂຕົວຈິງ ເພີ່ມໃຫ້ໄດ້ຕາມແຜນການ 2021-2025 ຈະປູກ 200.000 ເຮັກຕາ, ສະເລ່ຍເນື້ອທີ່ປູກໄມ້ ປີລະ 40.000 ເຮັກຕາ. ພ້ອມນີ້, ພວກເຮົາຈົ່ງພ້ອມກັນປູກຈິດສຳນຶກໃຫ້ເດັກນ້ອຍລາວຮູ້ຮັກ ແລະ ຫວງແຫນປ່າໄມ້, ປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ເຂົາເຈົ້າມີສ່ວນຮ່ວມໃນການປູກຕົ້ນໄມ້, ປົກປັກຮັກສາຕົ້ນໄມ້ທີ່ປູກແລ້ວ ອັນຈະເປັນການປະກອບສ່ວນເພີ່ມເນື້ອທີ່ປົກຫຸ້ມຂອງປ່າໄມ້ ເພື່ອເພີ່ມຄວາມອຸດົມສົມບູນຂອງປ່າໄມ້ ເພື່ອຄວາມຢູ່ເຢັນເປັນສຸກຕະຫຼອດໄປ ເຊິ່ງສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ແລະ ຍຸດທະສາດຕ່າງໆທີ່ກ່ຽວຂ້ອງກັບປ່າໄມ້.

ນອກນີ້, ກໍຍັງເປັນການປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ປີ 2021-2030 ເຊິ່ງແມ່ນຍຸດທະສາດທີ 5 ຄືພົນທະພິນລະເມືອງ ແລະ ການມີສ່ວນຮ່ວມ ໂດຍກຳນົດວ່າ: “ປູກຈິດສຳນຶກໃຫ້ກັບຊາວໜຸ່ມ, ເຍົາວະຊົນກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໂດຍການສົ່ງເສີມຄວາມຮູ້ຈິດສຳນຶກ ແລະ ພຶດຕິກຳທີ່ດີຕໍ່ສິ່ງແວດລ້ອມ” ອີກດ້ວຍ.

**ໂດຍ: ສີວັນ**

## ວິທີເຮັດວຽກ




**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

7. ວຽກການຂອງພັກ ທຸກອັນ ຕ້ອງຮັກສານ້ຳໃຈປະຕິວັດຂອງມັນ, ແຕ່ຕ້ອງຊ່າງໃຊ້ວິທີການເຮັດ ໂດຍໃຫ້ທຸກຄົນມີຄວາມມ່ວນຊື່ນເບີກບານ, ຖ້າບໍ່ດັ່ງນັ້ນ ກໍແມ່ນບໍ່ຮູ້ວິທີການຕໍ່ສູ້ ແລະ ວິທີການຈັດຕັ້ງໃຫ້ໝັ້ນ, ບໍ່ຮູ້ປະສົມປະສານຜົນປະໂຫຍດປະຈຳວັນ ກັບຜົນປະໂຫຍດຍາວນານຂອງປະຊາຊົນ.

8. ພັກ ບໍ່ຫ່ອນເຊື່ອງອຳຂໍ້ບົກພ່ອງຂອງຕົນ ແລະ ບໍ່ຢ້ານການຕຳໜິ. ພັກຕ້ອງຮັບເອົາຂໍ້ບົກພ່ອງຂອງຕົນ ເພື່ອແກ້ໄຂດັດແປງຕົນເອງ ເພື່ອໃຫ້ຕົນເອງກ້າວໜ້າ ແລະ ເພື່ອອົບຮົມສັ່ງສອນພະນັກງານ ແລະ ສະມາຊິກຂອງພັກ.

9. ພັກ ຕ້ອງຄັດເລືອກເອົາບຸກຄົນທີ່ຊື່ສັດບໍລິສຸດ ແລະ ຫ້າວຫັນເຂົ້າພັກ, ສາມັກຄີຂະເຈົ້າເປັນໜ່ວຍແກ່ນສານສຳລັບເຮັດການນຳພາ.

10. ພັກ ຕ້ອງໝັ່ນປັດເຂ່ຍພວກຄົນທີ່ຊົ່ວຮ້າຍອອກຈາກພັກ ເພື່ອເຮັດໃຫ້ພັກປອດໃສ ແລະ ເຂັ້ມແຂງສະເໝີ.

11. ພັກຕ້ອງຮັກສາລະບຽບວິໄນຢ່າງເຄັ່ງຄັດ ຕັ້ງແຕ່ເທິງລົງລຸ່ມ ລະບຽບວິໄນນີ້ ແມ່ນຄວາມນຶກຄິດຕ້ອງເປັນເອກະພາບກັນ, ການກະທຳກໍຕ້ອງເປັນເອກະພາບກັນ. ລະບຽບວິໄນນີ້ ແມ່ນນ້ຳໃຈຕື່ນຕົວຂອງສະມາຊິກ ໃນການປະຕິບັດໜ້າທີ່ຂອງຕົນ ກ່ຽວກັບພັກ.

12. ພັກຕ້ອງໝັ່ນກວດກາເບິ່ງມະຕິຕົກລົງ ແລະ ຄຳສັ່ງຕ່າງໆຂອງຕົນແຕ່ກ່ອນມາ ເພື່ອໃຫ້ຮູ້ໄດ້ວ່າ ປະຕິບັດໄປພຽງໃດແລ້ວ, ຖ້າບໍ່ເຮັດແນວນັ້ນ ມະຕິຕົກລົງ ແລະ ຄຳສັ່ງເຫຼົ່ານັ້ນ ຈະກາຍເປັນຄຳສັ່ງແບບນ້ຳເຕົ້າເປົ່າ ກໍຈະພາໃຫ້ເສຍຫາຍເຖິງຄວາມເຊື່ອຖືຂອງປະຊາຊົນກ່ຽວກັບພັກ.

ຖ້າຢາກໃຫ້ພັກໝັ້ນແກ່ນແໜ້ນໜາໃນ 12 ຂໍ້ທີ່ວາງອອກຂ້າງເທິງນັ້ນ ຢ່າໄດ້ລືມຂໍ້ໃດຂໍ້ໜຶ່ງຢ່າງເດັດຂາດ.

ອ່ານຕໍ່ສະບັບໜ້າ...

SCNG
SOMCHAYNEUK GROUP




# ປູກປ່າ-ປູກຈິດສຳນຶກ

\# ດົ້ນກົບເມກ



ວັນທີ 1 ເດືອນ 6 ເຊິ່ງເປັນວັນປູກຕົ້ນໄມ້ ທີ່ສັງຄົມບ້ານເຮົາ ແລະ ຫຼາຍອົງການຈັດຕັ້ງພັກ-ລັດ ໄດ້ນຳພາປູກຕົ້ນໄມ້ທຸກປີ ເຊິ່ງຖືເປັນການນຳພາເປັນແບບຢ່າງໃຫ້ແກ່ເຍົາວະຊົນໜຸ່ມນ້ອຍ ໃນການປູກຕົ້ນໄມ້ ແຕ່ຜູ້ຂຽນຄິດວ່າ: ທາງດ້ານສະຖາບັນຄອບຄົວ ແລະ ໂຮງຮຽນ ຍັງຈະຕ້ອງໄດ້ຊ່ວຍກັນປູກຝັງຈິດສຳນຶກເດັກນ້ອຍ ໃນການຮູ້ຈັກປ່າໄມ້-ຮູ້ຮັກສາ, ຮູ້ປູກ.

ການປູກຈິດສຳນຶກໃຫ້ເຍົາວະຊົນ, ນັກຮຽນ ຈຶ່ງໜີບໍ່ພົ້ນບົດບາດຂອງຄູອາຈານ ວ່າກະໂຕຄູ-ອາຈານເອງ ກໍຕ້ອງໄດ້ປະພຶດເປັນແບບຢ່າງໃນການປູກຕົ້ນໄມ້-ຮັກຕົ້ນໄມ້ ບໍ່ແມ່ນຄິດພຽງວ່າ ຮອດຍຸກທັນສະໄໝຫ້ອງການມີແອແລ້ວ ບໍ່ສົນໃຈອາກາດຂ້າງນອກຫ້ອງການ ເຊິ່ງເຮົາສັງເກດໄດ້ວ່າ ບາດເວລາມີງານ ໃຜໆກະຢາກຈອດລົດຢູ່ຮົ່ມຕົ້ນໄມ້ ຢາກຢືນ-ນັ່ງຢູ່ກ້ອງຮົ່ມໄມ້ ແຕ່ຖ້າບໍ່ຄິດຈະປູກ-ບໍ່ຄິດຈະສ້າງຈິດສຳນຶກເປັນແບບຢ່າງແກ່ເຍົາວະຊົນ ເຮົາຈະສອນເຂົາໄດ້ແນວໃດ? ຖ້າວ່າປາກກັບການກະທຳບໍ່ກົງກັນ...?

ສະຖາບັນຄອບຄົວ, ພໍ່ແມ່ຜູ້ປົກຄອງ ກໍຍິ່ງມີບົດບາດສຳຄັນໃນການແນະນຳ, ປັ້ມນິດໄສໃຫ້ລູກຫຼານຮັກຕົ້ນໄມ້-ປູກຕົ້ນໄມ້ ເຊິ່ງການປູກຝັງນິດໄສແຕ່ຍັງນ້ອຍ ເປັນສິ່ງສຳຄັນດີກວ່າຈະວາງເສີຍເສຍເວລາ ພໍເມື່ອອາຍຸແກ່ເຖົ້າກໍສອນຍາກ ເຊິ່ງບໍ່ຕ່າງກັບ ໄມ້ແກ່ກາຍຍາມເບັດ ເຫັດແກ່ກາຍຍາມແກງ, ຖ້າວ່າສະຖາບັນຄອບຄົວ, ໂຮງຮຽນ, ການຈັດຕັ້ງທຸກພາກສ່ວນຮ່ວມມືກັນ, ໂຄສະນາ, ສ້າງຂະບວນຟົດຟື້ນນຳພາເຍົາວະຊົນ ບໍ່ພຽງແຕ່ປູກມື້ດຽວ ວັນທີ 1 ເດືອນ 6 ແຕ່ຄວນສອນໃຫ້ເຂົາເຈົ້າປູກໄດ້ຕາມຄວາມສະດວກເໝາະສົມ, ສອນໃຫ້ເຂົາເຈົ້າຫົດນໍ້າພູນດິນ ເອົາໃຈໃສ່ຜົນປູກຂອງເຂົາເຈົ້າໃຫ້ເຕີບໃຫຍ່.

ຜູ້ຂຽນຄິດວ່າ: ຮູບແບບການປູກຈິດສຳນຶກ-ສ້າງຄ່ານິຍົມ ຕໍ່ການປູກໄມ້-ປູກດົງປ່າ-ຮັກທຳມະຊາດ ເປັນທາງແກ້ອັນໜຶ່ງ ເຮັດໃຫ້ຈິດໃຈຄົນເຮົາຊຸ່ມເຢັນ, ເຮັດໃຫ້ອາກາດບໍ່ຮ້ອນ, ບັນດາສັດຕ່າງໆກໍໄດ້ອາໄສ ເຊິ່ງຄິດວ່າເລື່ອງນີ້ບໍ່ຄວນຖືເບົາ!.



## ຂຽນຄໍາລາວໃຫ້ຖືກ

\#ຄູແສງ

ປາກົດການ ຂຽນຄຳສັບຜິດພ້ຽນໄປຈາກຄຳສັບເດີມ ຍ້ອນໃນເວລາເວົ້າ ພວກເຮົາມັກເວົ້າໄວ ເຮັດໃຫ້ເກີດການປ່ຽນສຽງ ໂດຍສະເພາະແມ່ນພະຍາງໜ້າໃນຄຳສັບ ຈາກສຽງຍາວກໍຈະກາຍເປັນສຽງສັ້ນ. ເມື່ອເວົ້າໄປເລື້ອຍໆ ການສະກົດຄຳ ກໍຈະປ່ຽນໄປຕາມສຽງທີ່ເວົ້າ ດັ່ງຕົວຢ່າງໃນລຸ່ມນີ້:

| ເວລາຂຽນ | ເວລາເວົ້າ |
|---|---|
| ຂ້ານ້ອຍ | ຂະນ້ອຍ |
| ເຂົ້າໜົມ | ຂະໜົມ |
| ເຂົາເຈົ້າ | ຂະເຈົ້າ, ກະເຈົ້າ |

# ປູກຈິດສຳນຶກ

ໂດຍ: ຫຼານລຸງ

ໃນຍຸກທີ່ເສດຖະກິດຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ກະແສອະນຸລັກສິ່ງແວດລ້ອມກໍຂະຫຍາຍຕົວຢ່າງເປັນຂະບວນການໂດດເດັ່ນເຊັ່ນດຽວກັນ, ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການທົ່ວໂລກ ຕ່າງກໍຮ່ວມມືກັນເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ, ປູກຈິດສຳນຶກໃຫ້ລູກຫຼານອະນຸຮັກສິ່ງແວດລ້ອມ ແລະ ພັດທະນາສັງຄົມສີຂຽວ ໃຫ້ເຕີບໃຫຍ່ຂະຫຍາຍຕົວໄປຄຽງຄູ່ກັບການພັດທະນາເສດຖະກິດ; ນັກອະນຸຮັກສິ່ງແວດລ້ອມຍັງໄດ້ມີຊື່ເອີ້ນຂະບວນການແນວຄວາມຄິດນີ້ວ່າ "ການບໍ່ສ້າງຂີ້ເຫຍື້ອ (Zero waste)" ຕໍ່ກັບສະພາບການໃນປັດຈຸບັນ ທ່ານເດ ມີຄວາມຄິດເຫັນແນວໃດ ກ່ຽວກັບກະແສນິຍົມທີ່ກວ້າງຂວາງໃນການພັດທະນາແບບຍືນຍົງ ເພື່ອໃຫ້ສັງຄົມເປັນສັງຄົມສີຂຽວ ແລະ ໜ້າຢູ່ຍິ່ງຂຶ້ນ ບວກກັບສະພາບການທີ່ທົ່ວໂລກກຳລັງຕໍ່ສູ້ກັບພາວະເສດຖະກິດຝືດເຄືອງ ທີ່ບໍ່ຮູ້ວ່າເມື່ອໃດມັນຈະຫວິດໄປຈາກເຮົານັ້ນ ຍິ່ງຄວນຕ້ອງມີສະຕິເອົາໃຈໃສ່ປະຢັດຊັບພະຍາກອນທີ່ມີຢູ່ຢ່າງຈຳກັດ ເພາະອະນາຄົດເປັນສິ່ງທີ່ບໍ່ແນ່ນອນ, ມະນຸດ ແລະ ທຳມະຊາດຕ່າງກໍເພິ່ງພາອາໄສເຊິ່ງກັນ ແລະ ກັນ.

ການຮັກສາສິ່ງແວດລ້ອມ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງໝົດທຸກຄົນ ໂດຍການເລີ່ມຈາກຕົວເຮົາເອງ, ຄອບຄົວ, ສັງຄົມອ້ອມຂ້າງ ກໍສາມາດຊ່ວຍໂລກໃຫ້ສວຍງາມຂຶ້ນໄດ້, ຢ່າຖືເປັນສິ່ງໜ້າອາຍຫາກຈະເປັນຜູ້ລິເລີ່ມ, ພວກເຮົາມາຊ່ວຍກັນຫັນສັງຄົມໃຫ້ເປັນສັງຄົມສະອາດ ເພາະເມື່ອຂີ້ເຫຍື້ອໜ້ອຍລົງ ອຸດສາຫະກຳແປຮູບກໍຈະໃຊ້ພະລັງງານໜ້ອຍລົງ ເຮັດໃຫ້ການປ່ອຍອາຍເສຍກໍຈະໜ້ອຍລົງໄປນຳ; ຈຶ່ງເຮັດໃຫ້ເຮົາສາມາດສູດອາກາດສົດໄດ້ເຕັມປອດໃນທຸກໆມື້; ສິ່ງສຳຄັນ ຄືການໃຫ້ກຳລັງໃຈ ແລະ ສ້າງແບບຢ່າງໃຫ້ກາຍເປັນກະແສນິຍົມດ້ານບວກ, ປູກຝັງທັດສະນະສີຂຽວໃຫ້ເຍົາວະຊົນຄົນຮຸ່ນໜຸ່ມ ກໍຄືລູກຫຼານ ແລະ ກະຕຸກຊຸກຍູ້ສັງຄົມໃຫ້ໜ້າຢູ່ຂຶ້ນໄປ. ພ້ອມນັ້ນ, ຍັງເປັນການປະກອບສ່ວນສ້າງສາປະເທດຊາດ ຕາມມາດຕະການປະຢັດ ແລະ ຕ້ານການຟຸ່ມເຟືອຍ ທີ່ລັດຖະບານໄດ້ວາງອອກໃຫ້ມີປະສິດທິພາບຍິ່ງຂຶ້ນ.



ແລ້ວທ່ານເດ ມີຄວາມປະສົງທີ່ຢາກຈະຊ່ວຍສັງຄົມ ຫຼື ສ້າງສັງຄົມໃຫ້ເປັນສີຂຽວ ເພື່ອໃຫ້ໂລກໜ້າຢູ່ຫຼືບໍ່; ສະນັ້ນ, ເຮົາລອງມາປັບປ່ຽນກິດຈະວັດປະຈຳວັນຂອງເຮົາ ເພື່ອຈຳກັດຂີ້ເຫຍື້ອ ມີຫຍັງແດ່?

1. ຊື້ເຄື່ອງໜ້ອຍລົງ: ໂດຍຈຳກັດການຊື້ໃຫ້ຫຼຸດລົງ ເພື່ອບໍ່ໃຫ້ເສຍເວລາກັບການມັ້ຽນມັດ, ສັບຊ້ອນ ເພື່ອບໍລິຈາກ, ຂາຍເປັນເຄື່ອງມືສອງ ຫຼື ກາຍເປັນຂີ້ເຫຍື້ອກອງໃຫຍ່ທີ່ສຸດ;

2. ຖືຖົງຜ້າໃນເວລາໄປຊື້ເຄື່ອງຢູ່ຕະຫລາດ ເພື່ອຫຼີກລ່ຽງການນຳເອົາຖົງຢາງກັບມາເຮືອນ: ໂດຍປະຕິເສດການນຳໃຊ້ຖົງປາລາສະຕິກ ໃນເວລາຊື້ອາຫານ, ເລືອກວັດຖຸພັນທີ່ຍ່ອຍສະຫຼາຍງ່າຍ ຫຼື ສາມາດນຳມາໃຊ້ຊໍ້າໄດ້ຫຼາຍໆເທື່ອ ເຊັ່ນ ຊື້ຊີ້ນໝູ ຫຼື ຂອງປຽກ, ແຫຼວ ກໍຄວນນຳເອົາກ່ອງໄປແຕ່ເຮືອນ ເພື່ອໃສ່ອາຫານກັບມາບ້ານໄດ້.

3. ກຽມຖົງຜ້າ ແລະ ກັບ/ກ່ອງເປົ່າ ທີ່ສະອາດໄວ້ໃນລົດເປັນປະຈຳ ເພື່ອໃສ່ອາຫານ ຫຼື ຂອງກິນສຸກ ໂດຍຫຼີກລ່ຽງການໃສ່ກ່ອງໂຟມ ຫຼື ຖົງຢາງປາລາສະຕິກ;

4. ພົກພາກະຕຸກນໍ້າດື່ມຂອງຕົນເອງ ແລະ ແຕ່ງອາຫານໄປກິນເອງ: ເຖິງບ້ານເຮົາຈະຍັງບໍ່ທັນມີນໍ້າດື່ມສະອາດ ທີ່ສາມາດດື່ມໄດ້ທົ່ວໄປຄືຫຼາຍປະເທດ ແຕ່ການມີກະຕຸກນໍ້າດື່ມສ່ວນຕົວ ກໍຊ່ວຍຫຼຸດປາລາສະຕິກໄດ້ຫຼາຍສົມຄວນ ທັງເປັນການປະຢັດເວລາ ແລະ ລາຍຈ່າຍຕື່ມອີກດ້ວຍ.

5. ການແຍກປະເພດຂີ້ເຫຍື້ອ: ແຍກເສດອາຫານ ທີ່ສາມາດຍ່ອຍສະຫຼາຍໄດ້ ເຊັ່ນ ຜັກ ແລະ ໝາກໄມ້ຕ່າງໆ ເພື່ອນຳໄປຝັງດິນ ຫຼືເຮັດປຸຍຊີວະພາບ ເພື່ອນຳໄວ້ໃຊ້ໃນສວນຄົວຂອງຕົນ.

6. ເລືອກການຍ່າງແທນການໃຊ້ລົດ ເພາະນອກຈາກປະຢັດຄ່ານໍ້າມັນແລ້ວ ຍັງໄດ້ສຸຂະພາບ ແລະ ຍັງຫຼຸດຜ່ອນມົນລະພິດນຳອີກ;

7. ໃຊ້ເຄື່ອງຂອງທີ່ມີໃຫ້ເກີດປະໂຫຍດສູງສຸດ: ຖ້າເປ່ເພກໍເອົາໄປແປງ ເພື່ອນຳມາໃຊ້ຄືນ.

8. ປະດິດສິ່ງຂອງດ້ວຍຕົນເອງ: ຮຽນຮູ້ທີ່ຈະໝູນໃຊ້, ສ້ອມແປງ ຫຼື ປະດິດສິ່ງຂອງຕ່າງໆດ້ວຍຕົນເອງ ໂດຍການຫາຂໍ້ມູນໄດ້ຈາກອິນເຕີເນັດ ເພື່ອປະດິດສິ່ງຂອງຕ່າງໆໄວ້ໃຊ້ເອງ ໂດຍຫຼີກລ່ຽງອຸປະກອນທີ່ກ່ຽວກັບໄຟຟ້າ ຫຼື ວັດຖຸໄວໄຟທີ່ອັນຕະລາຍ.

9. ຫັນເປັນດີຈີຕອນ ຫຼື ຫັນເປັນທັນສະໄໝໃຫ້ທັນໂລກສາກົນ ໂດຍຫຼີກລ່ຽງການໃຊ້ເຈ້ຍ ເຊິ່ງໝູນໃຊ້ລະບົບດີຈີຕອນເຂົ້າໃນທຸກວຽກງານ ເຊັ່ນ ການຊຳລະບິນ, ວຽກງານເອກະສານຕ່າງໆ.

10. ເຝິກຈິດຂຽວສະອາດ: ໝາຍເຖິງມີສະຕິສີຂຽວຕະຫຼອດເວລາ, ກວດເບິ່ງອຸປະກອນເອເລັກໂທຣນິກ, ເຄື່ອງໃຊ້ໄຟຟ້າຕ່າງໆ ຫາກນຳໃຊ້ແລ້ວຄວນໃຫ້ຖອດປັກສຽບທຸກເທື່ອ ກ່ອນອອກຈາກເຮືອນ ຫຼື ຫ້ອງການ.

ສຳລັບ 10 ຂໍ້ທີ່ກ່າວມານັ້ນ ມັນອາດຈະເປັນເລື່ອງທີ່ຫຍຸ້ງຍາກໃນເບື້ອງຕົ້ນ ແຕ່ຖ້າປະຕິບັດເລື້ອຍໆຈົນກາຍເປັນຄວາມຊິນເຄີຍ ເຊື່ອວ່າມັນຈະກາຍເປັນນິໄສອັນດີຕິດຕົວເຮົາໄປຕະຫຼອດ ແລະ ຜົນທີ່ໄດ້ຮັບກໍຈະຊ່ວຍໃຫ້ເຮົາມີສຸຂະພາບທີ່ແຂງແຮງ, ຊີວິດຍືນຍາວ ແລະ ວິຖີຊີວິດລຽບງ່າຍຂຶ້ນໄປຫຼາຍລະດັບ;

**ຂໍ້ມູນຈາກ:**
**www.theguardian.com**



## ສຸກສະບາຍຫາຍໂຣຄາ

# ໂຣກຫຼອດເລືອດໃນສະໝອງ

ໂຣກຫຼອດເລືອດສະໝອງ ຫຼື ເສັ້ນເລືອດຕັນ ແມ່ນອາການທີ່ຂາດເລືອດໄປລ້ຽງສະໝອງ ເນື່ອງຈາກເສັ້ນເລືອດຕີບ, ຕັນ ຫຼື ແຕກ ເຮັດໃຫ້ເນື້ອເຍື່ອສະໝອງຖືກທຳລາຍ ເຮັດໃຫ້ການເຮັດວຽກຂອງສະໝອງບາງສ່ວນ ຫຼື ທັງໝົດ ຜິດປົກກະຕິ ເຊິ່ງມັກຈະເກີດຂຶ້ນຢ່າງກະທັນຫັນ ເຮັດໃຫ້ເກີດອາການ:

- ເວົ້າບໍ່ແຈ້ງ ລີ້ນແຂງ;
- ຄິດຄຳສັບຕ່າງໆບໍ່ອອກ ສື່ສານບໍ່ເຂົ້າໃຈ;
- ແຂນຂາອ່ອນແຮງ ຫຼື ມືນຊາຂ້າງໃດຂ້າງໜຶ່ງ;
- ວິນຫົວ, ຍ່າງເຊ;
- ເຫັນຮູບພາບຊ້ອນ, ສາຍຕາຜິດປົກກະຕິ.

ເຊິ່ງອາດຈະສັງເກດອາການໄດ້ຕາມຫຼັກການ FAST ເຊິ່ງປະກອບມີ:

- F : ໃບໜ້າ (face) ຄົນເຈັບຈະມີໃບໜ້າທີ່ບິດບ້ຽວ;
- A : ແຂນ (arm) ແຂນຂາອ່ອນແຮງ;
- S : ການເວົ້າ (speech) ຄົນເຈັບຈະເວົ້າບໍ່ແຈ້ງ, ເວົ້າບໍ່ມີແຮງ ຄືວ່າລີ້ນຄັບປາກ;
- T : ເວລາ (time) ນຳສົ່ງຄົນເຈັບທີ່ສົງໄສໄປໂຮງໝໍທີ່ໃກ້ທີ່ສຸດ ໄວເທົ່າທີ່ຈະໄວໄດ້.



**ວິທີປ້ອງກັນ**

- ໝັ່ນກວດເບິ່ງຄວາມດັນເລືອດ ຖ້າຄວາມດັນເລືອດສູງກວ່າ 140/80 mmHg ຄວນໄປພົບແພດ ແລະ ກິນຢາປິ່ນປົວຄວາມດັນເລືອດໃຫ້ເປັນປົກກະຕິ ຕາມໝໍສັ່ງ;
- ປັບປ່ຽນນິໄສການກິນອາຫານ ໂດຍຫຼຸດການກິນອາຫານທີ່ເຄັມ, ຫວານ, ເຜັດຫຼາຍ ແລະ ປ່ຽນມາກິນຜັກ ແລະ ໝາກໄມ້ໃຫ້ຫຼາຍຂຶ້ນ;
- ເຊົາສູບຢາແລະເຄື່ອງດື່ມທີ່ມີທາດເຫຼົ້າ;
- ຫຼຸດນ້ຳໜັກ ໃນກໍລະນີທີ່ມີນ້ຳໜັກຫຼາຍເກີນໄປ;
- ອອກກຳລັງກາຍເປັນປົກກະຕິ ຢ່າງໜ້ອຍອາທິດລະ 3 ເທື່ອ ການອອກກຳລັງກາຍຄວນເປັນການອອກກຳລັງກາຍທີ່ເຮັດໃຫ້ຫົວໃຈເຕັ້ນໄວກວ່າປົກກະຕິ ຢ່າງໜ້ອຍ 10-20 ເທື່ອຕໍ່ນາທີ ແລະ ຢ່າງໜ້ອຍເຄິ່ງຊົ່ວໂມງໃນແຕ່ລະຄັ້ງ;
- ກວດສຸຂະພາບປະຈຳໃນທຸກໆປີ ເພື່ອວັດແທກລະດັບນ້ຳຕານ ແລະ ໄຂມັນໃນເລືອດ ເພື່ອຊອກຫາປັດໄຈສ່ຽງທີ່ເກີດຈາກເສັ້ນເລືອດຕັນໃນສະໝອງ;
- ໝັ່ນກວດເຊັກຫົວໃຈ ວ່າມີຄວາມຜິດປົກກະຕິຂອງການເຕັ້ນຂອງຫົວໃຈຫຼືບໍ່.

**ຂໍ້ມູນຈາກ: www.praram9.com**



## ອາດ ກະວີລາວ

# ຄວນເປັນແບບຢ່າງ

**# ແກ້ວຕາວັນ**

❋ ຜູ້ໃຫຍ່ເຄີຍຜ່ານຮ້ອນ
ປະສົບການມີຫຼາຍ
ຄົນເກີດມາພາຍຊ້ອຍ
ນຳມາເປັນແບບເບົ້າ

ມາກ່ອນຫຼາຍປີ
ກ່າຍກອງກັນລົ້ນ
ລຸນຫຼັງແລລໍ່າ
ເອົາໄວ້ຫູ່ຕົນ

❋ ຄັນວ່າຄົນເພີ່ນຜູ້
ທຳຕົນເປັນຄົນດີ
ບໍ່ຈອງຫອງຫາລໍ້
ຄົນພາຍຫຼັງຈຶ່ງໄດ້

ເປົາຢູ່ມາດົນ
ທີ່ສັງຄົມຍໍຍ້ອງ
ໂລເລລວງລ່າຍ
ມີເບົ້າຫຼູ່ດີ

❋ ຫາກວ່າມາກ່ອນແລ້ວ
ຊອກແຕ່ທຳຕົວເໜືອນ
ເມື່ອຄົນຫຼັງເຂົາຈ້ອງ
ກໍຄືງໝາງໜິ່ນເສົ້າ ຫາເອົາດີບໍ່ໄດ້

ກະທຳຊົ່ວເລວຊາມ
ຊາດເດຍລະສານເຊື້ອ
ລອງເອົາເປັນຕົວຢ່າງ
ໃຈຊິເປື້ອນເປິະເໝັນ ຊົ້ນໃດ

❋ ສາທຸ ຂໍໃຫ້ຜູ້ໃຫຍ່ໄດ້
ເປັນທີ່ຄົນຄວນຍໍ
ໃຫ້ລູກຫຼານເຫຼັນຕ້ອງ
ຍ່າງຖືກທາງທ່ຽງແທ້ ບໍ່ໂລເລແອ່ລ້ຽວ

ກະທຳແຕ່ຄວາມດີ
ຊື່ນຊົມນິຍົມຍ້ອງ
ເອົາເປັນຕົວຢ່າງ
ໄປເບື້ອງບ່ອນບໍ່ດີ

❋ ສັງຄົມລາວຈຶ່ງໄດ້
ສ້າງເມືອງເຮົາເຮືອງຮອງ
ໃຫ້ຊື່ສຽງລາວກ້ອງ
ວ່າຄົນລາວເກັ່ງກ້າ ຄຸນສົມບັດພຽບພ້ອມ

ມີຄົນໃໝ່ພັນດີ
ຮຸ່ງສີວິໄລກ້າວ
ກວງໄກຄົນຊ່ຳ
ສົມຊັ້ນຊື່ລາວ ຊອບແລ້ວ!






## ລົມສາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສາວຈົ້ມ**

❋ **ວັນ**ທີ 1 ຜ່ານມາ ສະພາແຫ່ງຊາດ ໄດ້ຈັດພິທີສະເຫຼີມສະຫຼອງວັນ**ເດັກນ້ອຍສາກົນ** ແລະ ວັນ**ປູກຕົ້ນໄມ້ແຫ່ງຊາດ** ບັນຍາກາດຄຶກຄື້ນ ເບື້ອງທີ່ວສັງຄົມ ມີທັງ ຊົມສິລະປະ ພໍ່**ກິດຈະກຳ**ຫຼິ້ນເກມຕອບ-ຖາມ ແຖມເບັ້ນກວດກາສຸຂະພາບ ພານັກຮຽນແຫ່ຢ້ຽມ ຢາມເບື້ອງບ່ອນປະຊຸມ **ຊົມເຊີຍ!**

❋ ຍັງວັນອຽນຢູ່ກັບວັນທີ **1 ມິຖຸນາ** ເພາະເຫັນຫົວຂໍ້ຂ່າວກ່າວໄວ້ວ່າ **ປີ 2030** ສປປລາວ ວາງຄາດໝາຍ ສູ້ຊົນ ຮັກສາທີ່ດິນປ່າໄມ້ **16,5 ລ້ານເຮັກຕາ** ຮອງຮັບມາຮຽບຮ້ອຍ ແຜນໃຫຍ່ຜັນຂະຫຍາຍ **ໃຫ້ໄດ້ເນີ!** ປູກ-ຮັກສາຕາມແຜນ ລ່ອຍກັບຄົນຕົ້ນ ສູ້ຊົນຄຸ້ມຄອງໄວ້ ໃຫ້**ຍືນຍົງ**ຄົງຢູ່ ຄູ່ປະຊາຊາດເຊື້ອ ຄືກໍເກົ່າຫຼັງ **ນັບຕ້ອນ!**

## ຊອບຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ຢ່າມາຕົວະ

ເດັກນ້ອຍສອງຄົນກຳລັງຍ່າງຢູ່ແຄມທາງ ທັນໃດເຂົາກໍ່ພາກັນແຫງນໜ້າຂຶ້ນຟ້າ, ຄົນໜຶ່ງເວົ້າຂຶ້ນວ່າ:

- ກູຈື່ແລ້ວລະ ນີ້ແມ່ນຍົນປະທານປະເທດ

- ມຶງເປັນບ້າຕີ! ຄົນແມ່ນຍົນປະທານປະເທດ ຄືບໍ່ມີຂະບວນລົດນຳຫາງຂຶ້ນນະ, ມຶງຢ່າມາຕົວະ.



## ຂະຕິເຕືອນໃຈ

**#ດອກຫຍ້າ**

ກິນໃຫ້ເບິ່ງທີ່ ຂີ້ໃຫ້ເບິ່ງບ່ອນ




# ປະດັບຍົນ

"ປະດັບຍົນ" ເປັນກິລິຍາວະລີ ປະກອບດ້ວຍຄຳວ່າ "ປະດັບ" ຈາກເຄົ້າຂະແມເດີມ **ប្រដាប** (ປຣະດາປ) ແລ້ວແປງສຽງເປັນຄຳລາວວ່າ "ປະດັບ" ໝາຍເຖິງ "ຕົກແຕ່ງໃຫ້ງາມ" ແລະ "ຍົນ" ຈາກເຄົ້າປາລີ Yanta, ສັນສະກິດ यन्त्र Yantra ໝາຍເຖິງ "ເຄື່ອງຈັກທີ່ໃຫ້ກຳເນີດພະລັງງານ ຫຼື ເຮັດໃຫ້ວັດຖຸເຄື່ອນທີ່". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ປະດັບຍົນ", ຖ້າເປັນຄຳນາມ ກໍໝາຍເຖິງ "ອຸປະກອນຕົກແຕ່ງລົດຍົນ", ຖ້າເປັນຄຳວິເສດ ກໍໝາຍເຖິງ "ຊື່ຮ້ານທີ່ຂາຍແລະຕິດຕັ້ງອຸປະກອນຕົກແຕ່ງລົດຍົນ ເຊິ່ງເອີ້ນວ່າ ຮ້ານປະດັບຍົນ".

ຄຳວ່າ "ປະດັບຍົນ" ນີ້ ເມື່ອກ່ອນລາວເຮົາບໍ່ໄດ້ຍິນ. ພາຍຫຼັງນັກທຸລະກິດໄທເຂົ້າມາຕັ້ງຮ້ານຂາຍ ແລະ ຕິດຕັ້ງອຸປະກອນປະດັບລົດຍົນ ແລະ ກໍໃສ່ຊື່ຮ້ານນີ້ວ່າ "ຮ້ານປະດັບຍົນ" ເຊິ່ງແປງສຽງມາຈາກພາສາໄທ ຄຳເດີມອອກສຽງວ່າ "ຮ້ານປຣະດັບຍົນ" (ร้านประดับยนต์).

ເມື່ອສົມທຽບລະຫວ່າງສຽງໄທ ແລະ ລາວ ໃນວະລີນີ້ແລ້ວ ກໍມີຄວາມຕ່າງ ແລະ ຄືກັນດັ່ງນີ້: ໄທວ່າ "ຮ້ານ (ร้าน)" ສ່ວນລາວວ່າ "ຮ້ານ", ຄຳທີສອງ ໄທອອກສຽງວ່າ "ປຣະດັບ" (ประดับ) ລາວອອກສຽງວ່າ "ປະດັບ" ສ່ວນ "ຍົນ" ລາວອອກສຽງວ່າ "ຍົນ" ໄທອອກສຽງວ່າ "ຍົນ" (ยนต์).

ແຕ່ບັນຫາແມ່ນ "ຍົນ" ໃນພາສາລາວ ປັດຈຸບັນແມ່ນໝາຍເຖິງ "ເຮືອບິນ", ສ່ວນ "ຍົນ" ຢູ່ວະລີນີ້ ໃນພາສາໄທພັດຕັດຫຍໍ້ມາຈາກ "ລົດຍົນ" (รถยนต์). ທີ່ຈິງເວລາສ້າງຄຳຂຶ້ນທຳອິດ ເຂົາກໍວ່າ "ປະດັບລົດຍົນ" (ประดับรถยนต์) ແຕ່ຍ້ອນມັກໃຊ້ສັ້ນ ຕໍ່ມາຈຶ່ງຕັດຄຳວ່າ "ລົດ" (รถ) ອອກ ຍັງແຕ່ "ຍົນ" (ยนต์) ຈຶ່ງກາຍມາເປັນວະລີ "ປະດັບຍົນ" ຄືດັ່ງທີ່ພວກເຮົາເຫັນ ແລະ ໄດ້ຍິນໃນຊຸ່ມື້ນີ້.

ຍ້ອນແນວນັ້ນ, ວະລີນີ້ ຫຼາຍຄົນຈຶ່ງມັກເວົ້າຢອກເຢີຍກັນວ່າ ເຮົາບໍ່ມີຍົນຊິໄປປະດັບດອກ ມີແຕ່ລົດເກົ່ານີ້ລະ!!!"

# ຂໍ້ສັງເກດ: ຄຳວ່າ "ຍົນ" ທີ່ພວກເຮົາໃຊ້ໃນພາສາລາວທີ່ໝາຍເຖິງ "ເຮືອບິນ", ເວົ້າທຳອິດກໍແມ່ນ "ຍົນເຫາະ" ດັ່ງດຽວກັບຄຳວ່າ "ເຮືອເຫາະ" ເຊິ່ງຕໍ່ມາໄດ້ປ່ຽນເປັນ "ເຮືອບິນ". ສ່ວນວ່າ "ຍົນເຫາະ" ຕໍ່ມາ ຄຳວ່າ "ເຫາະ" ໄດ້ຖືກຕັດອອກຍັງແຕ່ "ຍົນ" ແຕ່ກໍຍັງຮັກສາຄວາມໝາຍຄືກັບ "ຍົນເຫາະ" ນັ້ນຢູ່. ປັດຈຸບັນໃນພາສາຂະແມ ກໍຍັງເອີ້ນ "ເຮືອບິນ" ວ່າ **យន្តហោះ** (ຍົນເຫາະ ອອກສຽງວ່າ "ຍົນເຮາະ").




ຄາລົມຄົມປາກຂອງຄົນເຮົານີ້ ບໍ່ຕ່າງຫຍັງກັບລົດຊາດຂອງການອົມຄຳໝາກ ຜູ້ເພິ່ນຊ່ຳນານ ຊ່າງປຸງຊ່າງແຕ່ງ ໄດ້ລົດຊາດພໍເໝາະພໍດີ ແຕ່ບາງຄົນປຸງລົດບໍ່ຄິດຫງ່າ ໃສ່ປູນຫຼາຍ ປູນກໍກັດປາກ ໃສ່ປູນໜ້ອຍຄຳໝາກກໍບໍ່ແດງ.




# ນາຍົກລັດຖະມົນຕີແອັສປາຍ ປະກາດຍຸບສະພາ ຈັດການເລືອກຕັ້ງ 23 ກໍລະກົດນີ້



ອີງຕາມການລາຍງານໃຫ້ຮູ້ວ່າ: ວັນທີ 29 ພຶດສະພາຜ່ານມາ, ທ່ານ ເປໂດຣ ຊານເຊ ນາຍົກລັດຖະມົນຕີຂອງແອັສປາຍ ຖະແຫລງຜ່ານທາງໂທລະພາບລະບຸວ່າ: ໄດ້ສະເໜີສົມເດັດພະລາຊາທິບໍດີ ເຟລີເປ ທີ 6 ກ່ຽວກັບການຕັດສິນໃຈຍຸບສະພາ ເພື່ອເປີດທາງໃຫ້ມີການເລືອກຕັ້ງທົ່ວໄປກ່ອນກຳນົດໃນວັນທີ 23 ກໍລະກົດນີ້.

ການຕັດສິນໃຈດັ່ງກ່າວມີຂຶ້ນຫຼັງຈາກພັກລັດຖະບານ PSOE ຂອງທ່ານ ເປໂດຣ ຊານເຊ ແລະ ພັກພັນທະມິດ ເສຍໄຊການເລືອກຕັ້ງທ້ອງຖິ່ນ ແລະ ການເລືອກຕັ້ງລະດັບທ້ອງຖິ່ນທີ່ຈັດຂຶ້ນໃນວັນທີ 28 ພຶດສະພາ. ຂະນະທີ່ພັກຂວາຈັດ ຄື ພັກຄອນເຊີເວທີບພີເພິລ ແລະ ພັກ Vox ສ້າງຜົນງານໃນການເລືອກຕັ້ງໄດ້ຫຼາຍກວ່າ.

# ປະທານາທິບໍດີຕວກກີ ໄດ້ດຳລົງຕຳແໜ່ງອີກໜຶ່ງສະໄໝ



ມີການລາຍງານຂ່າວເມື່ອວັນຈັນອາທິດນີ້ວ່າ, ທ່ານ ເຣເຈບ ໄຕຍິບ ແອຣໂດອັນ ປະທານາທິບໍດີຕວກກີ ອາຍຸ 69 ປີ ໄດ້ຮັບໄຊຊະນະໃນການເລືອກຕັ້ງຕວກກີຮອບ 2 ເຊິ່ງຈັດຂຶ້ນໃນວັນທີ 28 ພຶດສະພາ ຕໍ່ອາຍຸໃຫ້ທ່ານໄດ້ດຳລົງຕຳແໜ່ງປະທານາທິບໍດີຕໍ່ອີກ 5 ປີ.

ຜົນການນັບຄະແນນເລືອກຕັ້ງຢ່າງເປັນທາງການອອກມາວ່າ: ທ່ານ ເຣເຈບ ໄຕຍິບ ແອຣໂດອັນ ໄດ້ຄະແນນ 52,1%, ຂະນະທີ່ຄູ່ແຂ່ງຄົນສຳຄັນຄືທ່ານ ເຄມັລ ຄິລິກດາໂຣກລູ ຈາກກຸ່ມພັນທະມິດ Nation Alliance ແລະ ຫົວໜ້າພັກ CHP ໄດ້ຄະແນນ 47,9%.

ການເລືອກຕັ້ງທີ່ເກີດຂຶ້ນຖືເປັນຈຸດສົນໃຈ ໂດຍກ່ອນໜ້ານີ້ພັກຝ່າຍຄ້ານຄາດຫວັງວ່າຈະມີໂອກາດເຮັດໃຫ້ທ່ານ ເຣເຈບ ໄຕຍິບ ແອຣໂດອັນ ຫຼຸດພົ້ນຈາກຕຳແໜ່ງປະທານາທິບໍດີ ແລະ ປ່ຽນແປງນະໂຍບາຍຂອງປະເທດຄືນໃໝ່ ຫຼັງຈາກຄວາມນິຍົມຂອງທ່ານ ເຣເຈບ ໄຕຍິບ ແອຣໂດອັນ ເລີ່ມຫຼຸດລົງ ເນື່ອງຈາກວິກິດຄ່າຄອງຊີບທີ່ສູງຂຶ້ນ ບວກຄວາມລົ້ມເຫຼວໃນການບໍລິຫານການຊ່ວຍເຫຼືອປະຊາຊົນຕອນເກີດເຫດແຜ່ນດິນໄຫວຄັ້ງໃຫຍ່ພາຍໃນປະເທດ.



#ກາລິບເບ

## ປີ້ງ ຈີ່ ຢ້າງ

ໃນ 3 ຄຳສັບທີ່ວ່ານີ້ ມີຄວາມໝາຍຕ່າງກັນ ຄົນຮຸ່ນໃໝ່ຢູ່ໃນຕົວເມືອງບໍ່ຄ່ອຍຈະເຂົ້າໃຈ ເພາະເຂົາເຈົ້າບໍ່ເຄີຍເຫັນຄຳວ່າ ຈີ່ ແລະ ຢ້າງ ຈະແມ່ນປີ້ງ ຈີ່ ຫຼື ຢ້າງ ກໍຕີຄວາມໝາຍຢ່າງດຽວກັນວ່າ ຢ້າງ ທີ່ຈິງແລ້ວ ມັນມີຄວາມໝາຍຕ່າງກັນ.

**ປີ້ງ:** ໃນຄຳວ່າ ປີ້ງ ແມ່ນການນຳເອົາ ປາ ຫຼື ໄກ່ ແລະ ອື່ນໆ ເຂົ້າໄປໜີບໃສ່ໄມ້ປີ້ງ ທີ່ຜ່າໃຫ້ເປັນສອງງ່າມ ຫຼື ບໍ່ກໍສຽບໃສ່ໄມ້ ແລ້ວນຳໄປປີ້ງ ຫຼື ຂາງໃສ່ກ່ານໄຟ ໃຫ້ຕ່າງໆ ເພື່ອໃຫ້ສຸກໄວ ເອີ້ນວ່າ ປີ້ງ.

**ຈີ່:** ໃນຄຳວ່າ ຈີ່ ແມ່ນການນຳເອົາຊີ້ນ ຫຼື ປາ ກົ້ມໃສ່ກ່ານໄຟແດງໆນັ້ນໂລດ ເມື່ອມັນອ້ອນຂ້າງຈະໄໝ້ ເພິ່ນກໍເອົາມືຈັບ ແລ້ວປີ້ນຂ້າງໃໝ່ ເມື່ອມັນສຸກແລ້ວ ກໍນຳເອົາອອກມາບ່າຍເຂົ້າກິນແບບຟ້າວຟັ່ງ ການຈີ່ນີ້ແມ່ນການຟ້າວຟັ່ງໃນການກິນ.

**ຢ້າງ:** ການຢ້າງ ແມ່ນການນຳເອົາປາ. ປີ້ງ. ເປັດ ແລະໄກ່ ເພື່ອໄວ້ກິນຍາວນານ.

ຢ້າງ ແມ່ນການດັງໄຟຂຶ້ນ ແຕ່ບໍ່ໃຫ້ລຸກແຮງ ແລ້ວເພິ່ນຈະສານກະແຕະໄມ້ໄຜ່ໃຫ້ເປັນຕາໜ່າງຫ່າງໆ ແລ້ວກໍເຮັດຫຼັກ ເປັນ 4 ຫຼື 2 ຫຼື ໃສ່ຫາງຂອກເຕົາໄຟ ແລ້ວກໍເອົາກະແຕະທີ່ສານນັ້ນເປີໃສ່ເຫຼັກທີ່ວາງສູງ ປະມານ 1ແມັດ ແລ້ວກໍເອົາຊີ້ນ ຫຼື ປາທີ່ຈະຢ້າງນັ້ນ ໄປເປີໃສ່ໃນກະແຕະນັ້ນ ຢ້າງ ແມ່ນໃຊ້ເວລາໝົດຫ້າມື້ ຫຼື ສອງມື້ ເມື່ອມັນແຫ້ງກອບດີແລ້ວ ກໍເອົາອອກໄປເກັບໄວ້ກິນຍາວນານ.

ສະນັ້ນໃນຄຳວ່າປີ້ງ. ຈີ່. ຢ້າງ ຈຶ່ງຕ່າງກັນ ບໍ່ແມ່ນໃຊ້ຄຳດຽວຄືໄທວ່າ ປີ້ງ. ຈີ່. ຢ້າງ ກໍເອົາຄຳດຽວວ່າ "ຢ້າງ" ທັງໝົດ ຈຶ່ງບໍ່ແມ່ນເປັນການກົກຕ້ອງ.

ເງົ່າໄວ້ ໄດ້ຂໍ້ຄຶດ

❖ ວິເສດ ສະແຫວງສຶກສາ

# ທົ່ວໂລກ ເອົາມາດຕະການຕ້ານຢາສູບ



ເນື່ອງໃນໂອກາດວັນຢຸດສູບຢາໃນລະດັບໂລກ (World No Tobacco Day) 31 ພຶດສະພານີ້, ຜູ້ຂຽນຂໍສືບຕໍ່ບັນຫາມາເລົ່າ ກ່ຽວກັບມາດຕະການຂອງບາງປະເທດແນໃສ່ກໍາຈັດ ຫຼື ຫຼຸດຜ່ອນຢາສູບ ເພື່ອເຫັນແກ່ສຸຂະພາບຂອງພົນລະເມືອງ ແລະ ເພື່ອປ້ອງກັນຜົນຮ້າຍຈາກຢາສູບ ທີ່ສົ່ງຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ. **ຢູ່ປະເທດອິດຕາລີ,** ໃນເອີຣົບ, ທາງການຂອງປະເທດນີ້ໄດ້ປະກາດໃຊ້ກົດໝາຍ ຫ້າມສູບຢາ ໃນຮ້ານອາຫານ ແລະ ຮ້ານບັນເທີງທົ່ວໄປນັບແຕ່ວັນທີ 1 ພະຈິກ 2019 ເປັນຕົ້ນມາ. ວ່າກັນວ່າ ອີດຕາລີ ເປັນປະເທດໜຶ່ງທີ່ມີສິງອົມຄວັນເປັນຈໍານວນຫຼວງຫຼາຍ. ໃນເບື້ອງຕົ້ນ, ກ່ອນຈະຖືກຮັບຮອງເອົາເປັນກົດໝາຍຢ່າງສົມບູນນັ້ນ, ຮ່າງກົດໝາຍສະບັບນີ້ໄດ້ປະເຊີນກັບ ສະພາບກະຕຸກກະຕັກ ຍ້ອນມີການປະເຊີນກັບກະແສຄັດຄ້ານຈາກສັງຄົມ (ແນ່ນອນກໍ່ແມ່ນຈາກກຸ່ມສິງອົມຄວັນນັ້ນລະ) ແລະ ຈາກບາງກຸ່ມ ສະມາຊິກລັດຖະສະພາເອງ. ແຕ່ແລ້ວກະແສຄັດຄ້ານກໍ່ຖືກຕີຖອຍ ເມື່ອສະມາຄົມນາຍແພດແຫ່ງຊາດ ໄດ້ພ້ອມພຽງກັນຍື່ນຄໍາສະເໜີ ສະໜັບສະໜູນໃຫ້ມີການຮັບຮອງເອົາ ແລະ ປະກາດໃຊ້ກົດໝາຍສະບັບນີ້. ຄໍາສະເໜີຂອງສະມາຄົມນາຍແພດດັ່ງກ່າວນັ້ນ ໄດ້ຮັບກໍາລັງແຮງສະໜັບສະໜູນຈາກຊາວອິດຕາລີ ຈໍານວນເກືອບ 9 ແສນຄົນ ຫຼື ເທົ່າກັບ ¼ ຂອງຜູ້ມີສິດເລືອກຕັ້ງໃນປະເທດ. ໃນທີ່ສຸດ ເພື່ອຜ່ອນຄາຍກະແສຄັດຄ້ານ, ກົດໝາຍໄດ້ກໍານົດຂໍ້ຍົກເວັ້ນ ສໍາລັບຮ້ານອາຫານ ແລະ ຮ້ານບັນເທີງຈໍານວນໜຶ່ງ ຄື ອະນຸຍາດໃຫ້ສູບຢາ ໄດ້ໃນບັນດາຮ້ານທີ່ມີຄວາມກວ້າງກວ່າ 50 ແມັດ ແຕ່ຕ້ອງມີພື້ນທີ່ແຍກຕ່າງຫາກສໍາລັບຜູ້ສູບຢາ. ອີກຂ່າວໜຶ່ງທີ່ອອກມາຈາກ**ປະເທດພູຖານ** ເຊິ່ງຟັງແລ້ວອ່າວແປກຫູ ຄືໃນໄລຍະພະຍາດໂຄວິດ-19 ລະບາດນັ້ນ, ທາງການໄດ້ຜ່ອນຜັນມາດຕະການຫ້າມສູບຢາວ່າ ເພື່ອໃຫ້ປະຊາຊົນໄດ້ມີໂອກາດຜ່ອນຄາຍອາລົມ, ເພື່ອຫຼຸດຜ່ອນຄວາມເຄັ່ງຄຽດຍ້ອນຖືກກັກບໍລິເວນ ຫຼື ຖືກຫ້າມອອກນອກເຮືອນ. ໃນໄລຍະນີ້, ປະຊາຊົນທົ່ວໄປສາມາດຊື້ຢາສູບຕ່າງປະເທດໄດ້ຕາມຮ້ານປອດພາສີ, ຂ່າວບອກວ່າ ນະໂຍບາຍຜ່ອນຜັນນີ້ ໄດ້ຊ່ວຍຄວບຄຸມການນໍາເຂົ້າຢາສູບຕ່າງປະເທດແບບຜິດກົດໝາຍ ເຊັ່ນ ການລັກລອບຊື້-ຂາຍຢາສູບຕາມຊາຍແດນ ເຊິ່ງມີຄວາມສ່ຽງຕິດແປດພະຍາດໂຄວິດ-19. ປະເທດພູຖານ ມີກົດໝາຍຄວບຄຸມຢາສູບ ປະກາດໃຊ້ມາແຕ່ປີ 2010, ເປັນກົດໝາຍທີ່ເຄັ່ງຄັດພໍສົມຄວນ ຄືຫ້າມທັງຜະລິດ ແລະ ທັງຈໍາໜ່າຍຢາສູບທຸກຊະນິດ. ສໍາລັບຢາສູບທີ່ນໍາເຂົ້າຈາກຕ່າງປະເທດນັ້ນ ທາງການອະນຸຍາດໃຫ້ຈໍາໜ່າຍໄດ້ແບບຈໍາກັດທີ່ສຸດ ພ້ອມທັງໄດ້ກໍານົດເພດານພາສີໄວ້ສູງໆ ແລະ ຍ້ອນແນວນີ້ເອງ ຈຶ່ງເກີດມີບັນຫາລັກລອບຊື້-ຂາຍຢາສູບ ຕາມຊາຍແດນ. ການທີ່ທາງການຜ່ອນຜັນໃຫ້ຄົນທົ່ວໄປ ສາມາດຊື້ຢາສູບຈາກຮ້ານປອດພາສີໃນລາຄາຖືກໄດ້ ສາມາດກໍາຈັດການລັກລອບຊື້-ຂາຍ ຢາສູບຢູ່ຕາມຊາຍແດນດັ່ງໄດ້ກ່າວມາແລ້ວ. ບັດນີ້ຂໍກ້າວມາໃສ່ຂ່າວຈາກປະເທດ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ (**ສປປ ເກົາຫຼີ** ທີ່ຫຼາຍຄົນນິຍົມເອີ້ນເກົາຫຼີເໜືອ) ສປປ ເກົາຫຼີ ເປັນປະເທດທີ່ມີສິງອົມຄວັນຫຼາຍໃນລະດັບແຖວໜ້າຂອງໂລກ. ສະຖິຕິປີ 2013 ຊີ້ບອກວ່າຈໍານວນຄົນສູບຢາ ໃນປະເທດນີ້ກວມເອົາ 43,9% ຫຼືເກືອບເຄິ່ງໜຶ່ງຂອງຈໍານວນພົນລະເມືອງທັງໝົດ. ແຕ່ແລ້ວຂ່າວທີ່ອອກມາຈາກປະເທດນີ້ໃນວັນທີ 5 ພະຈິກ 2020 ໄດ້ໃຫ້ຮູ້ວ່າ ສະພາປະຊາຊົນສູງສຸດໄດ້ອອກກົດໝາຍຫ້າມສູບຢາຕາມສະຖານທີ່ສາທາລະນະຈໍານວນໜຶ່ງ ເຊັ່ນ: ໃນສູນຝຶກອົບຮົມການເມືອງຕ່າງໆ, ໂຮງຮູບເງົາ-ໂຮງລະຄອນ, ສູນການແພດ ແລະ ສະຖານທີ່ເຮັດວຽກຂອງໜ່ວຍງານສາທາລະນະສຸກ. ຈຸດປະສົງຂອງກົດໝາຍສະບັບນີ້ ແມ່ນເພື່ອໃຫ້ພົນລະເມືອງໄດ້ມີສະພາບແວດລ້ອມທີ່ເອື້ອອໍານວຍຕໍ່ການດໍາລົງຊີວິດທີ່ບໍລິສຸດ ແລະ ປອດໄພ. ຢູ່ ສປປ ລາວ ພວກເຮົາເດລະ... ການປະຕິບັດກົດໝາຍຄວບຄຸມຢາສູບ ເຮັດໄດ້ດີສໍ່າໃດແລ້ວ? ນີ້ເປັນຄໍາຖາມທີ່ຕ້ອງໄດ້ຮັບຄໍາຕອບຢ່າງຈະແຈ້ງ ເພາະຕາມສະຖິຕິແລ້ວ ຄົນລາວເສຍຊີວິດຍ້ອນຜົນກະທົບຂອງຢາສູບນັ້ນຍັງສູງຫຼາຍ ຄືປະມານ 13 ຄົນຕໍ່ວັນ!




## ອຸບັດເຫດ

*#ບ່າວກະບື*

ແກ້ວມິ່ງ ແບກໃບຫູແດງໆທັງສອງເບື້ອງເຂົ້າໄປຫາໝໍ. ທ່ານໝໍຖາມວ່າ ຫູລາເປັນຫຍັງມາ. ແກ້ວມິ່ງຕອບວ່າ "ຕອນຂ້ອຍພວມຣີດເສື້ອຢູ່ນັ້ນ ພໍດີສຽງໂທລະສັບດັງຂຶ້ນ, ແທນທີ່ຂ້ອຍຈະຍົກຫູໂທລະສັບຂຶ້ນຟັງ ຂ້ອຍໂລດບັງເອີນຫຼົງຍົກເຕົາຣີດຂຶ້ນມາແປະໃສ່ຫູ".

"ໂທເອີຍ" ທ່ານໝໍລັ່ນສຽງອອກມາ.

"ແຕ່ຫູອີກເບື້ອງໜຶ່ງເດລະ ເປັນຫຍັງ?"

"ກະຍ້ອນບັກຕາຍເວັບນັ້ນໂທມາອີກເທື່ອນແລ້ວ." ແກ້ວມິ່ງຕອບ

## REPEATED ACCIDENT

*# BAOKBU*

Keoming with two red ears went to his doctor. The medico asked him what had happened to his ears and he answered, "I was ironing a shirt and the phone rang, but instead of picking up the phone I accidentally picked up the iron and stuck it to my ear.

"Oh. dear ! " the doctor exclaimed,

" But what happened to your other ear ?"

"The scoundrel called back" replied Keoming.

ຈ່ມໝ່ວນ ຊວນຍິ້ມ



ຮ່ວມກັນເບິ່ງແຍງເບ້ຍໄມ້ ໃຫ້ກາຍເປັນຕົ້ນໄມ້ໃຫຍ່

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນໍາ : ທ່ານ ສິງຄໍາ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ : ທ່ານ ສີສຸພັນ ແສງສະຫວັນ, ທ່ານ ວິເສດ ສະແຫວງສຶກສາ, ທ່ານ ຄໍາວິສັນ ແກ້ວສຸວັນ

ຄະນະບັນນາທິການ : ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ, ທ່ານ ອັນທະວີ ວົງພະຈັນ ຮອງ ບກ, ທ່ານ ເປລໍາ ລໍຄໍາສອນ ຮອງ ບກ

ກອງບັນນາທິການ : ນາງ ກົງໃຈ ແສງອໍາພັນ, ນາງ ສຸພາວັນ ທອມສະນິດ, ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ : ນາງ ນິດຕາ ຄຸນປາກດີ